ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

01-08 ທັນວາ 2024
ປີທີ 13
ສະບັບທີ 996
ລາຍສັບປະດາ

## ຫົວໜ້າຄະນະກຳມາທິການວຽກງານງົບປະມານ ຢ້ຽມຂໍ່ານັບປະທານສະພາແຫ່ງຊາດ



(ສພຊ) - ວັນທີ 21 ພະຈິກນີ້ ທີ່ສະພາແຫ່ງຊາດ, ສະຫາຍ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ໄດ້ຕ້ອນຮັບການຢ້ຽມຂໍ່ານັບຂອງສະຫາຍ ຊຸຣິງຊາຍ ຫົວໜ້າຄະນະກຳມາທິການວຽກງານງົບປະມານ ຂອງສະພາຜູ້ແທນປະຊາຊົນທົ່ວປະເທດຈີນ ພ້ອມດ້ວຍຄະນະ ໃນໂອກາດທີ່ມາເຄື່ອນໄຫວຢ້ຽມຢາມ ແລະ ເຮັດວຽກຢູ່ ສປປລາວ ລະຫວ່າງວັນທີ 20-22 ພະຈິກ 2024.

ສະຫາຍ ປອ. ໄຊສົມພອນ ພົມວິຫານ ໄດ້ສະແດງຄວາມຍິນດີຕ້ອນຮັບ ພ້ອມທັງຕີລາຄາສູງຕໍ່ການຢ້ຽມຢາມແລະເຮັດວຽກໃນຄັ້ງນີ້ ທີ່ໄດ້ນຳເອົາໄມຕີຈິດມິດຕະພາບຂອງບັນດາສະຫາຍການນຳຂັ້ນສູງພັກ, ສະພາຜູ້ແທນປະຊາຊົນ,ລັດຖະບານ ແລະປະຊາຊົນຈີນອ້າຍນ້ອງມາສູ່ປະຊາຊົນລາວບັນດາເຜົ່າ ທັງເປັນການໃຫ້ບົດຮຽນແກ່ສະພາແຫ່ງຊາດລາວ ກ່ຽວກັບວຽກ

ອ່ານຕໍ່ໜ້າ 9




## ປັບປຸງເນື້ອໃນລັດຖະທຳມະນູນ ເພື່ອກຽມສະເໜີກອງປະຊຸມສະໄໝສາມັນເທື່ອທີ 8



(ສພຊ) - ກອງປະຊຸມເປີດກວ້າງຂອງຄະນະປະຈຳການຄະນະກຳມະການລະດັບຊາດປັບປຸງລັດຖະທຳມະນູນ ສະບັບປີ 2015 (ຄລຊ) ໄດ້ຈັດຂຶ້ນໃນຕອນເຊົ້າວັນທີ 25 ພະຈິກນີ້ ທີ່ສະພາແຫ່ງຊາດ (ສພຊ) ໂດຍການເປັນປະທານຂອງທ່ານ ສຈ. ປອ. ກິແກ້ວ ໄຂຄຳພິທູນ ຮອງນາຍົກລັດຖະມົນຕີ, ຮອງປະທານ ຄລຊ ເຊິ່ງມີບັນດາທ່ານຄະນະກຳມະການ ແລະ ອະນຸກຳມະການຕ່າງໆຂອງຄລຊ ເຂົ້າຮ່ວມ; ຈຸດປະສົງແມ່ນເພື່ອຮັບປະກັນໃຫ້ການປັບປຸງລັດ

ອ່ານຕໍ່ໜ້າ 9

## ການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ



(ສພຊ) - ຕາມວາລະການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ໃນຕອນບ່າຍວັນທີ 20 ພະຈິກນີ້ ໂດຍການເປັນປະທານຂອງທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ; ທ່ານພົອ. ວິໄລ ຫຼ້າຄຳຟອງ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ ໄດ້ລາຍງານກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ຕາມມະ

ອ່ານຕໍ່ໜ້າ 8

## ຮອງປະທານສະພາແຫ່ງຊາດ ຕ້ອນຮັບການຢ້ຽມຂໍ່ານັບຂອງຄະນະຜູ້ແທນ ສ.ເກົາຫຼີ



ອ່ານຕໍ່ໜ້າ 8

## ສະຫາຍ ຄຳໃບ ດຳລັດ ຕ້ອນຮັບຮອງປະທານຄະນະປະຈຳສະພາຜູ້ແທນປະຊາຊົນແຂວງຊານຊີ



(ສພຊ) - ວັນທີ 22 ພະຈິກນີ້ທີ່ສະພາແຫ່ງຊາດ, ສະຫາຍຄຳໃບ ດຳລັດ ຮອງປະທານສະພາແຫ່ງຊາດ ໄດ້ຕ້ອນຮັບການຢ້ຽມຂໍ່ານັບຂອງສະຫາຍ ເຫີທຽນຊາຍ ຮອງປະທານຄະນະປະຈຳສະພາຜູ້ແທນປະຊາຊົນແຂວງຊານຊີແຫ່ງ ສປຈີນ ພ້ອມດ້ວຍຄະນະ ໃນໂອກາດທີ່ມາເຄື່ອນໄຫວຢ້ຽມຢາມແລະເຮັດວຽກຢູ່ ສປປລາວ.

ສະຫາຍ ຄຳໃບ ດຳລັດ ໄດ້ສະແດງຄວາມຍິນດີຕ້ອນຮັບ ພ້ອມທັງຕີລາຄາສູງຕໍ່ການຢ້ຽມຢາມ ແລະ ເຮັດວຽກໃນຄັ້ງນີ້ ທີ່ໄດ້ນຳເອົາໄມຕີຈິດມິດຕະພາບຂອງພັກ, ລັດ ແລະ ປະຊາຊົນຈີນອ້າຍນ້ອງມາສູ່ປະຊາຊົນລາວບັນດາເຜົ່າ ທັງເປັນໂອກາດອັນດີໃນການແລກປ່ຽນບົດຮຽນ

ອ່ານຕໍ່ໜ້າ 5

## 6 ຄຳເຫັນ ໃຫ້ລັດຖະບານພິຈາລະນາ ປະຕິບັດການແກ້ໄຂບັນຫາຢາເສບຕິດ



(ສພຊ) - ທ່ານ ພົທ. ສຸວອນ ເລືອງບຸນມີ ຮອງປະທານສະພາແຫ່ງຊາດ ຕາງໜ້າຄະນະປະຈຳສະພາແຫ່ງຊາດ ໄດ້ປະກອບຄຳເຫັນຕໍ່ບົດລາຍງານຂອງລັດຖະບານກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ໂດຍມີບາງຄຳເຫັນເພື່ອໃຫ້ລັດຖະບານພິຈາລະນາຈັດຕັ້ງປະຕິບັດໃນຕໍ່ໜ້າ(ແຜນການປີ2025)ດັ່ງນີ້:

ອ່ານຕໍ່ໜ້າ 5



ບັນຫາປື້ນອ້ອມສື່ (ໜ້າ 8)



ລັດຖະສະພາ... (ໜ້າ 10)




ບາງບົດຮຽນໃນການແກ້ໄຂ ... (ໜ້າ 12)

ຊົມເຊີຍວັນສະຖາປະນາ ສປປລາວ ຄົບຮອບ 49 ປີ (02 ທັນວາ 1975 - 02 ທັນວາ 2024) ຢ່າງສຸດໃຈ!

# 3 ສ້າງ ປະກອບສ່ວນເຂົ້າໃນຜົນສຳເລັດລວມ ຂອງການພັດທະນາເສດຖະກິດ-ສັງຄົມ



(ສພຊ) - ການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX ໃນຕອນເຊົ້າວັນທີ 21 ພະຈິກນີ້ ໂດຍການເປັນປະທານຂອງທ່ານ ພົທ. ສຸວອນ ເລືອງບຸນມີ ຮອງປະທານສະພາແຫ່ງຊາດ; ທ່ານ ວິໄລວົງ ບຸດດາຄຳ ລັດຖະມົນຕີກະຊວງພາຍໃນໄດ້ລາຍງານກ່ຽວກັບການຈັດຕັ້ງປະຕິບັດວຽກງານ 3 ສ້າງ ຕາມມະຕິ 02/ສພຊ, ລົງວັນທີ 28 ມັງກອນ 2016 ວ່າດ້ວຍການຈັດຕັ້ງປະຕິບັດວຽກງານສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ສ້າງບ້ານເປັນຫົວໜ່ວຍພັດທະນາ ເຊິ່ງການຈັດຕັ້ງປະຕິບັດນະໂຍບາຍ 3 ສ້າງ ໄດ້ປະກອບສ່ວນອັນສຳຄັນເຂົ້າໃນຜົນສຳເລັດລວມຂອງການພັດທະນາເສດຖະກິດ-ສັງຄົມ,ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບເປັນຢ່າງດີ; ຊີວິດການເປັນຢູ່ຂອງປະຊາຊົນຢູ່ແຕ່ລະທ້ອງຖິ່ນໄດ້ຮັບການປັບປຸງປ່ຽນແປງໃຫ້ດີຂຶ້ນເປັນກ້າວໆ; ຊັບພະຍາກອນທຳມະຊາດ, ສິ່ງແວດລ້ອມ, ວັດທະນະທຳ, ຮີດຄອງປະເພນີອັນດີງາມຂອງປະຊາຊົນບັນດາເຜົ່າ ໄດ້ຮັບການອະນຸລັກແລະເສີມຂະຫຍາຍດ້ວຍການດຳເນີນນະໂຍບາຍຂອງບັນດາຂະແໜງການຂອງລັດທີ່ກ່ຽວຂ້ອງ. 3 ສ້າງ ແມ່ນວຽກງານຍຸດທະສາດ ທັງສະເພາະໜ້າ ແລະ ຍາວນານ, ບໍ່ແມ່ນເຮັດມື້ໜຶ່ງຍາມດຽວ, ເຮັດບັ້ນໜຶ່ງສອງບັ້ນ ແລ້ວຢຸດເຊົາ; ຫາກແມ່ນຕ້ອງດຳເນີນໄປຢ່າງເປັນລະບົບຕໍ່ເນື່ອງ, ມີການຕິດຕາມກວດກາ, ຊຸກຍູ້, ສະຫຼຸບຖອດຖອນບົດຮຽນເປັນແຕ່ລະໄລຍະ ແລະຍົກລະດັບຂຶ້ນເທື່ອລະກ້າວ.

ຕາມວາລະຂອງກອງປະຊຸມ, ທ່ານ ຄຳຈັນ ໂສຕາປະເສີດ ປະທານກຳມາທິການບັນດາເຜົ່າ ຕາງໜ້າຄະນະປະຈຳສະພາແຫ່ງຊາດ ໄດ້ປະກອບຄຳເຫັນຕໍ່ບົດລາຍງານດັ່ງກ່າວ, ປະທານກອງປະຊຸມໄດ້ເຈາະຈີ້ມແລະໃຫ້ທິດຊີ້ນຳແກ່ບັນດາທ່ານສະມາຊິກສະພາແຫ່ງຊາດ (ສສຊ) ໃນການຄົ້ນຄວ້າປະກອບຄຳເຫັນຢ່າງມີຈຸດສຸມຕໍ່ບົດລາຍງານພ້ອມທັງສະເໜີບັນດາທ່ານ ສສຊ ມີຄຳຊັກຖາມເພີ່ມຕື່ມຕໍ່ບັນຫາທີ່ຍັງມີຄວາມສົນໃຈ; ຈາກນັ້ນ, ທ່ານ ວິໄລວົງ ບຸດດາຄຳ ກໍໄດ້ຊີ້ແຈງກັບທີ່ ເພື່ອໃຫ້ຄວາມກະຈ່າງແຈ້ງຕໍ່ບັນດາຄຳຊັກຖາມ. ທ່ານນາງທັດສະດາພອນ ຈັນທະມາດ ຮອງປະທານກຳມາທິການບັນດາເຜົ່າ ໄດ້ສະເໜີຮ່າງມະຕິກອງປະຊຸມສະພາແຫ່ງຊາດວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດວຽກງານ 3 ສ້າງ ຕາມມະຕິ 02/ສພຊ, ລົງວັນທີ 28 ມັງກອນ 2016; ເພື່ອເຮັດໃຫ້ເນື້ອໃນຂອງຮ່າງມະຕິດັ່ງກ່າວມີຄວາມສົມບູນ, ປະທານກອງປະຊຸມໄດ້ສະເໜີບັນດາທ່ານ ສສຊ ປະກອບຄຳເຫັນໃສ່ເນື້ອໃນຮ່າງມະຕິຢ່າງມີຈຸດສຸມ; ຈາກນັ້ນ, ປະທານກອງປະຊຸມໄດ້ສະຫຼຸບສັງລວມການປະກອບຄຳເຫັນຕໍ່ຮ່າງມະຕິດັ່ງກ່າວ.

**(ນາງ ອາລິນ ສຸພົມມະປະດິດ)**

# ພິທີມອບ-ຮັບອຸປະກອນໄອທີ



(ສພຊ) - ຕອນບ່າຍວັນທີ 19 ພະຈິກຜ່ານມາ ທີ່ສະພາແຫ່ງຊາດ ໄດ້ມີພິທີມອບ-ຮັບອຸປະກອນໄອທີ ປະກອບມີຄອມພິວເຕີ 10 ໜ່ວຍ ແລະ ໂປຣແກຣມຊ່ວຍການປະຕິບັດງານ ລວມມູນຄ່າ 152 ລ້ານກີບ ຈາກກຸ່ມບໍລິສັດ ອີພີແອວ ຈຳກັດຜູ້ດຽວ ໃຫ້ແກ່ສະພາແຫ່ງຊາດ, ຕາງໜ້າກ່າວມອບໂດຍທ່ານ ແອັດ ພົມວິໄລ ປະທານກຸ່ມບໍລິສັດອີພີແອວ ຈຳກັດຜູ້ດຽວແລະຕາງໜ້າກ່າວຮັບໂດຍທ່ານ ປອ. ອາຄົມ ປຣະເສີດ ຮອງເລຂາທິການສະພາແຫ່ງຊາດ ເຊິ່ງມີພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມເປັນສັກຂີພະຍານ.

ທ່ານ ປອ. ອາຄົມ ປຣະເສີດ ໄດ້ສະແດງຄວາມຂອບໃຈ ແລະມອບໃບຍ້ອງຍໍຂອງຄະນະປະຈຳສະພາແຫ່ງຊາດ ເພື່ອເປັນການຍ້ອງຍໍຜົນງານດີເດັ່ນໃນການປະກອບສ່ວນຊຸກຍູ້ ແລະ ອຸປະຖຳໃນຄັ້ງນີ້.

**(ນາງ ອາລິນ ສຸພົມມະປະດິດ)**

# ກຳມາທິການວຽກງານງົບປະມານ ສະພາຜູ້ແທນປະຊາຊົນທົ່ວປະເທດຈີນ ຢ້ຽມຢາມ ແລະ ເຮັດວຽກຢູ່ ສປປລາວ



(ສພຊ) - ວັນທີ 21 ພະຈິກ 2024 ທີ່ສະພາແຫ່ງຊາດ, ສະຫາຍ ປອ. ລີເບີ ລີບົວປາວ ປະທານກຳມາທິການແຜນການ, ການເງິນ ແລະ ການກວດສອບ ສະພາແຫ່ງຊາດແຫ່ງສປປລາວ ໄດ້ພົບປະກັບສະຫາຍ ຊຸ ຣົງຊາຍ ຫົວໜ້າຄະນະກຳມາທິການວຽກງານງົບປະມານ ຂອງສະພາຜູ້ແທນປະຊາຊົນທົ່ວປະເທດ ແຫ່ງ ສປຈີນພ້ອມດ້ວຍຄະນະໃນໂອກາດມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປລາວ ລະຫວ່າງວັນທີ 20-22 ພະຈິກ 2024 ເຊິ່ງເປັນການປະກອບສ່ວນຮັດແໜ້ນ ແລະ ເສີມຂະຫຍາຍສາຍພົວພັນມິດຕະພາບອັນເປັນມູນເຊື້ອ ແລະ ຄູ່ຮ່ວມຍຸດທະສາດ ຮອບດ້ານ ໝັ້ນຄົງຍາວນານ ຕາມທິດ 4 ດີ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ແລະ ການເປັນຄູ່ຮ່ວມຊາຕາກຳສັງຄົມນິຍົມ ລາວ-ຈີນ, ຈີນ-ລາວ ໃຫ້ນັບມື້ເປັນຮູບປະທຳແລະນຳເອົາຜົນປະໂຫຍດສູງສຸດມາສູ່ປະຊາຊົນສອງຊາດ.

ໃນການພົບປະໃນຄັ້ງນີ້, ສອງຝ່າຍຮ່ວມກັນປຶກສາຫາລື, ແລກປ່ຽນຄຳຄິດເຫັນ ແລະບົດຮຽນ ໃນການເຄື່ອນໄຫວວຽກງານຂອງອົງການນິຕິບັນຍັດ ໂດຍສະເພາະແມ່ນພາລະບົດບາດ ແລະ ການເຄື່ອນໄຫວຂອງກຳມາທິການແຜນການ, ການເງິນ ແລະ ການກວດສອບ ຂອງສະພາແຫ່ງຊາດລາວແລະກຳມາທິການງົບປະມານ ຂອງສະພາຜູ້ແທນປະຊາຊົນທົ່ວປະເທດຈີນ; ພ້ອມທັງຮ່ວມກັນຕີລາຄາສູງຕໍ່ການພົວພັນຮ່ວມມືລະຫວ່າງສະພາແຫ່ງຊາດລາວ ກັບ ສະພາຜູ້ແທນປະຊາຊົນທົ່ວປະເທດຈີນທີ່ເປັນມູນເຊື້ອອັນດີງາມມາແຕ່ດົນນານ ແລະໄດ້ຮັບການເສີມຂະຫຍາຍຢ່າງຕໍ່ເນື່ອງແລະເປັນຮູບປະທຳ ເຊິ່ງສອງຝ່າຍໄດ້ປະກອບສ່ວນໃນການຈັດຕັ້ງຜັນຂະຫຍາຍຂໍ້ຕົກລົງການຮ່ວມມືລະຫວ່າງສອງອົງການນິຕິບັນຍັດໃນລະດັບສູນກາງ ແລະ ທ້ອງຖິ່ນ ເຊິ່ງສະແດງອອກມີການແລກປ່ຽນການຢ້ຽມຢາມຂອງຄະນະຜູ້ແທນຂັ້ນສູງ ແລະ ຂັ້ນຕ່າງໆ; ພິເສດ, ເດືອນກັນຍາ 2023 ໃນໂອກາດທີ່ສະຫາຍ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ໄປຢ້ຽມຢາມ ສປຈີນ ຢ່າງເປັນທາງການ, ສອງຝ່າຍກໍໄດ້ລົງນາມຂໍ້ຕົກລົງວ່າດ້ວຍການຮ່ວມມືລະຫວ່າງສະພາແຫ່ງຊາດລາວ ແລະ ສະພາຜູ້ແທນປະຊາຊົນທົ່ວປະເທດຈີນ ເຊິ່ງເປັນນິຕິກຳສະບັບທຳອິດຂອງສອງອົງການນິຕິບັນຍັດ ລາວ-ຈີນ. ນອກຈາກນັ້ນ, ຍັງມີການແລກປ່ຽນບົດຮຽນ, ຮ່ວມກັນຈັດສຳມະນາ ແລະ ເຝິກອົບຮົມ, ທັດສະນະສຶກສາ ກ່ຽວກັບການຈັດຕັ້ງປະຕິບັດພາລະບົດບາດຂອງສອງອົງການນິຕິບັນຍັດ ໂດຍສະເພາະການຮ່ວມມືແລກປ່ຽນທາງດ້ານວິຊາການ ເຊິ່ງສະພາຜູ້ແທນປະຊາຊົນທົ່ວປະເທດຈີນ ໄດ້ໃຫ້ທຶນກໍ່ສ້າງ ເຝິກອົບຮົມ ແລະທັດສະນະສຶກສາຢູ່ ສປຈີນ ໃຫ້ແກ່ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງ ແລະພະນັກງານຂອງສະພາແຫ່ງຊາດລາວ ນັບແຕ່ປີ 2015 ມາເຖິງປັດຈຸບັນ ມີຈຳນວນ 5 ຄັ້ງ; ສອງຝ່າຍຍັງໄດ້ສະໜັບສະໜູນເຊິ່ງກັນແລະກັນໃນເວທີລັດຖະສະພາພາກພື້ນ ແລະ ສາກົນ ເປັນຕົ້ນ AIPA, IPU, ASEP, APPF.

ສຳລັບທິດທາງການຮ່ວມມືໃນຕໍ່ໜ້າ, ສອງກຳມາທິການສືບຕໍ່ຈັດຕັ້ງຜັນຂະຫຍາຍຂໍ້ຕົກລົງວ່າດ້ວຍການຮ່ວມມືລະຫວ່າງສະພາແຫ່ງຊາດລາວ ກັບ ສະພາຜູ້ແທນປະຊາຊົນທົ່ວປະເທດຈີນ ໂດຍສະເພາະສືບຕໍ່ແລກປ່ຽນຄະນະຜູ້ແທນຂັ້ນສູງ, ຂັ້ນກຳມາທິການ, ຄະນະເລຂາທິການ, ຄະນະມິດຕະພາບລັດຖະສະພາ ແລະ ຂັ້ນວິຊາການ ທີ່ຕິດພັນກັບການແລກປ່ຽນບົດຮຽນ ແລະປະສົບການກ່ຽວກັບການປະຕິບັດພາລະບົດບາດນິຕິບັນຍັດ; ສະເໜີຝ່າຍຈີນສືບຕໍ່ໃຫ້ການຊ່ວຍເຫຼືອ ແລະ ພັດທະນາຊັບພະຍາກອນມະນຸດແກ່ສະພາແຫ່ງຊາດແລະສະພາປະຊາຊົນຂັ້ນທ້ອງຖິ່ນຂອງ ສປປລາວ; ສືບຕໍ່ເປັນເສນາທິການໃຫ້ແກ່ສະພາແຫ່ງຊາດລາວ ແລະສະພາຜູ້ແທນປະຊາຊົນທົ່ວປະເທດຈີນ ໃນການຊຸກຍູ້ ແລະ ສົ່ງເສີມໃຫ້ລັດຖະບານຂອງສອງປະເທດ ຈັດຕັ້ງປະຕິບັດບັນດາຂໍ້ຕົກລົງສັນຍາ, ອະນຸສັນຍາແລະບົດບັນທຶກຄວາມເຂົ້າໃຈຕ່າງໆ ທີ່ສອງຝ່າຍໄດ້ລົງນາມຮ່ວມກັນ ໃຫ້ເປັນຮູບປະທຳ ແລະ ນຳເອົາປະໂຫຍດມາສູ່ປະຊາຊົນຢ່າງແທ້ຈິງ; ສືບຕໍ່ຮ່ວມມືກັນແລກປ່ຽນບົດຮຽນ ແລະ ປະສົບການກ່ຽວກັບວຽກງານການເງິນ-ງົບປະມານ, ການຄຸ້ມຄອງໜີ້ສິນແລະຕິດຕາມກວດກາ ແລະ ບັນຫາອື່ນໆທີ່ສອງຝ່າຍມີຄວາມສົນໃຈ; ສືບຕໍ່ຮ່ວມມື, ສະໜັບສະໜູນ, ຊ່ວຍເຫຼືອ, ປະສານສົມທົບກັນໃນການເຄື່ອນໄຫວວຽກງານຕ່າງໆໃນເວທີພາກພື້ນ ແລະ ສາກົນ.

ໃນໂອກາດມາຢ້ຽມຢາມ ແລະເຮັດວຽກຢູ່ ສປປລາວ, ຄະນະຜູ້ແທນກຳມາທິການວຽກງານງົບປະມານ, ສະພາຜູ້ແທນປະຊາຊົນທົ່ວປະເທດຈີນ ຍັງໄດ້ເຂົ້າຢ້ຽມຂ່ຳນັບສະຫາຍ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ແຫ່ງ ສປປລາວ, ພົບປະເຮັດວຽກກັບສະຫາຍ ສັນຕິພາບ ພົມວິຫານ ລັດຖະມົນຕີກະຊວງການເງິນ ແຫ່ງ ສປປລາວ ແລະ ຢ້ຽມຊົມຫໍພິພິທະພັນໄມ້ຮ່ວມສະໄໝ ຢູ່ນະຄອນຫຼວງວຽງຈັນ.

**(ນາງ ອາລິນ ສຸພົມມະປະດິດ)**



# 5 ທິດທາງ ແລະ ມາດຕະການລວມ ຕໍ່ການປະເມີນການປະຕິບັດ 4 ກົດໝາຍ



(ສພຊ) - ການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX ເມື່ອວັນສຸກທີ 22 ພະຈິກຜ່ານມາ ໂດຍການເປັນປະທານຂອງທ່ານຄຳໃບ ດຳລັດຮອງປະທານສະພາແຫ່ງຊາດ; ຫຼັງຈາກຮັບຟັງລາຍງານຈາກຕາງໜ້າລັດຖະບານກ່ຽວກັບການປະເມີນຜົນການຈັດຕັ້ງປະຕິບັດ 4 ກົດໝາຍໃນຂົງເຂດວັດທະນະທຳ-ສັງຄົມ ຄື: ກົດໝາຍວ່າດ້ວຍການສຶກສາ, ກົດໝາຍວ່າດ້ວຍການຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ, ກົດໝາຍວ່າດ້ວຍແຮງງານແລະກົດໝາຍວ່າດ້ວຍປ້າຍ, ທ່ານບຸນຕາ ເທບພະວົງ ປະທານກຳມາທິການວັດທະນະທຳ-ສັງຄົມ ຕາງໜ້າຄະນະປະຈຳສະພາແຫ່ງຊາດ ໄດ້ປະກອບຄຳເຫັນຕໍ່ 4 ບົດລາຍງານດັ່ງກ່າວ ເຊິ່ງນັບແຕ່ປະກາດໃຊ້ກົດໝາຍທັງ 4 ສະບັບ ກົດໝາຍເຫຼົ່ານີ້ ລ້ວນແຕ່ເປັນເຄື່ອງມື ແລະ ບ່ອນອີງທີ່ສຳຄັນໃນການຄຸ້ມຄອງ, ຕິດຕາມ, ກວດກາ ແລະ ການເຄື່ອນໄຫວວຽກງານການສຶກສາ, ການຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ, ການຄຸ້ມຄອງ ແລະ ພັດທະນາວຽກງານແຮງງານ, ແລະ ວຽກງານການນຳໃຊ້ປ້າຍ; ສາມາດສະກັດກັ້ນການກະທຳຜິດ, ປົກປ້ອງຜົນປະໂຫຍດຂອງລັດ, ລວມໝູ່, ສິດແລະຜົນປະໂຫຍດອັນຊອບທຳຂອງພົນລະເມືອງ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງແຕ່ລະພາກສ່ວນ ທັງເປັນເຄື່ອງມືສຶກສາອົບຮົມພົນລະເມືອງໃຫ້ມີສະຕິເຄົາລົບ ແລະ ຈັດຕັ້ງປະຕິບັດກົດໝາຍຢ່າງຖືກຕ້ອງ ແລະ ເຂັ້ມງວດ ແນໃສ່ເຮັດໃຫ້ສັງຄົມມີຄວາມສະຫງົບ ແລະ ມີຄວາມເປັນລະບຽບຮຽບຮ້ອຍໂດຍພື້ນຖານ, ສັງຄົມໄດ້ເອົາໃຈໃສ່ ເຮັດໃຫ້ການເຄື່ອນໄຫວວຽກງານຂອງທຸກພາກສ່ວນທີ່ກ່ຽວຂ້ອງ ມີປະສິດທິພາບ, ມີປະສິດທິຜົນແລະມີຄວາມສອດຄ່ອງກັບແນວທາງນະໂຍບາຍຂອງພັກ, ລັດຖະທຳມະນູນ, ລະບຽບກົດໝາຍຂອງລັດ, ຕອບສະໜອງໄດ້ຄວາມຮຽກຮ້ອງຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມ, ສາມາດເຊື່ອມໂຍງກັບພາກພື້ນແລະສາກົນ, ປະກອບສ່ວນເຂົ້າໃນການສ້າງສາ ແລະ ພັດທະນາປະເທດຊາດ ໄດ້ເປັນຢ່າງດີ.

ທ່ານປະທານກຳມາທິການວັດທະນະທຳ-ສັງຄົມ ໄດ້ສະເໜີໃຫ້ລັດຖະບານເອົາໃຈໃສ່ຕື່ມຕໍ່ບາງທິດທາງ ແລະ ມາດຕະການລວມ ດັ່ງນີ້:

1. ຊີ້ນຳບັນດາກະຊວງທີ່ກ່ຽວຂ້ອງ ກ່ຽວກັບວຽກງານການສ້າງ ແລະ ປັບປຸງກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ໃນຕໍ່ໜ້າ ຕ້ອງຮັບປະກັນການຫັນເອົາແນວທາງແຜນນະໂຍບາຍມາກຳນົດເຂົ້າໃນກົດໝາຍໃຫ້ແທດເໝາະກັບຕົວຈິງ, ສອດຄ່ອງກັບລັດຖະທຳມະນູນ, ກົດໝາຍ, ນິຕິກຳໃຕ້ກົດໝາຍ, ສົນທິສັນຍາແລະສັນຍາສາກົນທີ່ ສປປລາວເປັນພາຄີແລະຈັງຫວະການພັດທະນາເສດຖະກິດ-ສັງຄົມໃນແຕ່ລະໄລຍະ; ການປັບປຸງເນື້ອໃນຂອງກົດໝາຍ ຕ້ອງແນໃສ່ ແກ້ໄຂບັນຫາທີ່ເຫັນວ່າບໍ່ທັນສອດຄ່ອງ, ມີຊ່ອງຫວ່າງ, ການຈັດຕັ້ງປະຕິບັດມີຄວາມຊ້ຳຊ້ອນ, ບັນຫາທີ່ຂັດກັບກົດໝາຍ ຫຼື ນິຕິກຳອື່ນ ແລະ ເພີ່ມບາງເນື້ອໃນທີ່ກົດໝາຍຍັງບໍ່ທັນໄດ້ກຳນົດໃຫ້ຄົບຖ້ວນ, ຮັດກຸມ, ເປັນລະບົບຄົບຊຸດ.

2. ບັນດາກະຊວງທີ່ກ່ຽວຂ້ອງ ໃຫ້ເປັນເຈົ້າການແລະຮີບຮ້ອນຄົ້ນຄວ້າຜັນຂະຫຍາຍມາດຕາຂອງກົດໝາຍ ທີ່ກຳນົດໃຫ້ອອກເປັນນິຕິກຳໃຕ້ກົດໝາຍ ແລະປະກາດໃຊ້ໂດຍໄວ; ພ້ອມກັນນັ້ນ, ໃຫ້ສືບຕໍ່ຄົ້ນຄວ້າແລະສັງລວມ ບັນດາມາດຕາຂອງກົດໝາຍ ທີ່ເຫັນວ່າເນື້ອໃນບໍ່ສອດຄອງ, ບໍ່ຈະແຈ້ງ ແລະ ປະຕິບັດໄດ້ຍາກ ເຊິ່ງມີຄວາມຈຳເປັນຕ້ອງໄດ້ມີການປັບປຸງ ເພື່ອເຮັດໃຫ້ກົດໝາຍດັ່ງກ່າວມີເນື້ອໃນສອດຄອງ, ຮັດກຸມ, ຈະແຈ້ງ ແລະ ສາມາດປະຕິບັດໄດ້ງ່າຍ.

3. ເພີ່ມທະວີການໂຄສະນາເຜີຍແຜ່ກົດໝາຍໃຫ້ເລິກເຊິ່ງ, ຕໍ່ເນື່ອງ, ກວ້າງຂວາງ, ທົ່ວເຖິງ ແລະ ແທດເໝາະກັບແຕ່ລະປະເພດເປົ້າໝາຍ ແນໃສ່ສ້າງຄວາມເຂົ້າໃຈທີ່ຖືກຕ້ອງ, ເປັນເອກະພາບຕໍ່ເນື້ອໃນແຕ່ລະກົດໝາຍ, ຍົກສູງສະຕິເຄົາລົບ ແລະ ປະຕິບັດກົດໝາຍໃນທົ່ວສັງຄົມ.

4. ປັບປຸງກົນໄກ ແລະ ຂັ້ນຕອນການປະສານງານ ກ່ຽວກັບການຄຸ້ມຄອງ,ຕິດຕາມກວດກາ, ການສ້າງແລະປັບປຸງ, ການປະເມີນ ແລະ ການຈັດຕັ້ງປະຕິບັດກົດໝາຍ, ນິຕິກຳໃຕ້ກົດໝາຍໃນຂົງເຂດວັດທະນະທຳ-ສັງຄົມ ລະຫວ່າງສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ບັນດາຂະແໜງການແລະພາກສ່ວນອື່ນທີ່ກ່ຽວຂ້ອງ ຂັ້ນສູນກາງ ແລະ ທ້ອງຖິ່ນ.

5. ລັດຖະບານ ກໍຄືຂະແໜງການທີ່ກ່ຽວຂ້ອງ ເອົາໃຈໃສ່ຕິດຕາມກວດກາການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ທົ່ວສັງຄົມ ໃຫ້ເປັນລະບົບ, ຕໍ່ເນື່ອງ ແລະ ສາມາດຄຸ້ມຄອງຢ່າງມີປະສິດທິພາບ.

ສຳລັບສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ສືບຕໍ່ຍົກສູງຄຸນນະພາບການປະຕິບັດພາລະບົດບາດດ້ານການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍໃນຂົງເຂດວັດທະນະທຳ-ສັງຄົມໃຫ້ເປັນລະບົບ, ປົກກະຕິແລະຕໍ່ເນື່ອງ.



# ບາງທັດສະນະຕໍ່ການປະຕິຮູບລະບົບການສຶກສາ ແລະ ການພັດທະນາຊັບພະຍາກອນມະນຸດ



(ສພຊ) - ການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX ໃນຕອນບ່າຍວັນທີ 21 ພະຈິກນີ້ ໂດຍການເປັນປະທານຂອງ ຄຳໃບ ດຳລັດ ຮອງປະທານສະພາແຫ່ງຊາດ; ຫຼັງຈາກທ່ານ ຮສ. ປອ. ພຸດ ສິມມາລາວົງ ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ໄດ້ລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນຍຸດທະສາດການປະຕິຮູບລະບົບການສຶກສາແຫ່ງຊາດ, ຍຸດທະສາດການພັດທະນາຊັບພະຍາກອນມະນຸດແຫ່ງຊາດໃນໄລຍະຜ່ານມາແລະທິດທາງແຜນການໃນຕໍ່ໜ້າ, ທ່ານ ບຸນຕາ ເທບພະວົງ ປະທານກຳມາທິການວັດທະນະທຳ-ສັງຄົມ ຕາງໜ້າຄະນະປະຈຳສະພາແຫ່ງຊາດ ໄດ້ປະກອບຄຳເຫັນຕໍ່ບົດລາຍງານດັ່ງກ່າວ ໂດຍສະເໜີບາງທັດສະນະຕໍ່ກັບທິດທາງແຜນການໃນຕໍ່ໜ້າ ເພື່ອໃຫ້ລັດຖະບານ ກໍຄືຂະແໜງການທີ່ກ່ຽວຂ້ອງ ນຳໄປຄົ້ນຄວ້າ ແລະ ພິຈາລະນາ ດັ່ງນີ້:

**ຕໍ່ກັບຍຸດທະສາດການປະຕິຮູບລະບົບການສຶກສາແຫ່ງຊາດ**

1. ສືບຕໍ່ເອົາໃຈໃສ່ສຶກສາອົບຮົມການເມືອງແນວຄິດໃຫ້ຄູ-ອາຈານ ມີຄຸນທາດການເມືອງທີ່ໜັກແໜ້ນ, ມີຈັນຍາບັນ, ຈັນຍາທຳ, ມີຄວາມຮັກຊາດ, ມີຄວາມອົດທົນສູງກວ່າເກົ່າ.

2. ປັບປຸງແລະສ້າງໃໝ່ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ທີ່ເຫັນວ່າມີຄວາມຈຳເປັນ.

3. ສຸມໃສ່ສ້າງ ແລະ ປັບປຸງຫຼັກສູດການຮຽນ-ການສອນໃນສາຍສາມັນສຶກສາ ແລະ ສາມັນວິຊາຊີບ; ພ້ອມນີ້, ກໍໃຫ້ສຶກສາຄົ້ນຄວ້າຄືນຫຼັກສູດເກົ່າທີ່ຍັງເຫັນວ່າດີມີປະໂຫຍດ, ຮຽນແລ້ວນັກຮຽນເຂົ້າໃຈ ກໍໃຫ້ນຳມາໃຊ້ຄືນໃໝ່.

4. ສ້າງໂຮງຮຽນກິນນອນ ຫຼື ສ້າງທີ່ຢູ່ອາໄສໃຫ້ນັກຮຽນຢູ່ເຂດຊົນນະບົດບ່ອນທີ່ມີຄວາມຫຍຸ້ງຍາກ.

5. ປັບປຸງກົນໄກປະສານງານ ແລະ ວິທີເຮັດວຽກຂອງຄະນະພັດທະນາການສຶກສາຂັ້ນບ້ານ ເພື່ອຮັບປະກັນການຄຸ້ມຄອງການນຳໃຊ້ເງິນປະກອບສ່ວນຂອງພໍ່ແມ່ນັກຮຽນ ແລະ ຊຸມຊົນ ໃຫ້ມີປະສິດທິຜົນສູງ.

6. ເປັນເຈົ້າການສຶກສາອົບຮົມໃຫ້ນັກຮຽນ-ນັກສຶກສາ ເຫັນໄດ້ຄວາມສຳຄັນຂອງວຽກງານການສຶກສາ ເພື່ອເຮັດໃຫ້ອັດຕາການປະລະການຮຽນຫຼຸດລົງ ແລະຂະຫຍາຍໂອກາດການເຂົ້າຮຽນໃໝ່ໃນທຸກຊັ້ນທຸກສາຍ ໃຫ້ນັບມື້ເພີ່ມຂຶ້ນ; ກວດກາຄືນ ແລະ ຊອກວິທີແກ້ໄຂບັນຫາທີ່ບາງບ້ານມີໂຮງຮຽນ ແຕ່ບໍ່ມີຄູ, ບາງບ້ານມີຄູແຕ່ມີນັກຮຽນໜ້ອຍ.

7. ສູ້ຊົນຂະຫຍາຍໂຄງການອາຫານທ່ຽງໃນໂຮງຮຽນ ໃຫ້ເພີ່ມຂຶ້ນ ແລະ ຄົ້ນຄວ້າພິຈາລະນາເພີ່ມເງິນ ຈາກ 1,000 ກີບຕໍ່ຄົນຕໍ່ຄາບ ຂຶ້ນຕື່ມຕາມຄວາມເໝາະສົມ ເພື່ອໃຫ້ເດັກໄດ້ຮັບໂພຊະນາການດີຂຶ້ນ.

8. ສູ້ຊົນພັດທະນາແລະປັບປຸງພື້ນຖານໂຄງລ່າງທາງດ້ານການສຶກສາ, ສ້າງຫໍພັກ, ຫ້ອງຮຽນ, ຫ້ອງອ່ານ, ສະໜອງປຶ້ມຕຳລາ, ວັດຖຸອຸປະກອນການຮຽນ-ການສອນ, ອຸປະກອນການກິລາ, ສິລະປະ, ມີກິດຈະກຳສຳລັບໄວໜຸ່ມ ແລະ ສ້າງເງື່ອນໄຂສະພາບແວດລ້ອມຂອງໂຮງຮຽນໃຫ້ເປັນສິ່ງດຶງດູດໃຫ້ນັກຮຽນຢາກໄປໂຮງຮຽນ ໃຫ້ມີການຂະຫຍາຍຕົວຕໍ່ເນື່ອງ.

9. ສູ້ຊົນແກ້ໄຂງົບປະມານເຂົ້າໃນວຽກງານການສຶກສາ, ວິທະຍາສາດ ແລະ ກິລາ ໃຫ້ໄດ້ຕາມກົດໝາຍກຳນົດໄວ້.

10. ສືບຕໍ່ເພີ່ມທະວີຄວາມເປັນເຈົ້າ ໃນການປະສານສົມທົບກັນ ເພື່ອຈັດຕັ້ງຜັນຂະຫຍາຍມະຕິຕົກລົງ ເລກທີ 09/ລບ, ລົງວັນທີ 17 ກໍລະກົດ 2023 ຕາມ 5 ນະໂຍບາຍ ແລະ 10 ມາດຕະການແກ້ໄຂການຂາດແຄນຄູສອນ; 3 ນະໂຍບາຍ ແລະ 12 ມາດຕະການ ແກ້ໄຂການປະລະການຮຽນຂອງນັກຮຽນ ແລະ ການສົ່ງເສີມການເຂົ້າຮຽນວິຊາຊີບໃຫ້ທົ່ວເຖິງ ແລະ ເປັນຮູບປະທຳຕົວຈິງໃຫ້ຫຼາຍຂຶ້ນ.

ຕໍ່ກັບຍຸດທະສາດການພັດທະນາຊັບພະຍາກອນມະນຸດແຫ່ງຊາດ

ສະເໜີໃຫ້ລັດຖະບານ ກໍຄືຄະນະກຳມາທິການແຫ່ງຊາດເພື່ອການພັດທະນາຊັບພະຍາກອນມະນຸດແຫ່ງຊາດສືບຕໍ່ສຸມໃສ່ຈັດຕັ້ງປະຕິບັດຍຸດທະສາດການພັດທະນາໃນໄລຍະທ້າຍທີ່ໄດ້ກຳນົດຮອດປີ 2025 ດັ່ງນີ້:

1. ສືບຕໍ່ສະຫຼຸບຕີລາຄາສະພາບການຈັດຕັ້ງປະຕິບັດຍຸດທະສາດການພັດທະນາຊັບພະຍາກອນມະນຸດແຫ່ງຊາດຕາມທີ່ກຳນົດໄວ້ ໃຫ້ເຫັນແຈ້ງດ້ານດີ ຜົນສຳເລັດ, ສາເຫດຕົ້ນຕໍ ແລະ ທິດທາງແຜນພັດທະນາຊັບພະຍາກອນມະນຸດໃນຕໍ່ໜ້າ ໃຫ້ມີຄວາມສອດຄ່ອງກັບໜ້າທີ່ການເມືອງໃນໄລຍະໃໝ່ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແຕ່ລະໄລຍະ ເພື່ອເປັນພື້ນຖານທີ່ໜັກແໜ້ນໃຫ້ແກ່ການກະກຽມຫັນປະເທດອອກຈາກສະຖານະພາບທຸກຍາກ ແລະ ດ້ອຍພັດທະນາໃນເວລາອັນໃກ້ນີ້ ທັງເປັນການສູ້ຊົນບັນລຸເປົ້າໝາຍການພັດທະນາແບບຍືນຍົງ (SDGs) ໃນປີ 2030.

2. ສ້າງຄົນລາວໃຫ້ເປັນພົນລະເມືອງດີ, ມີຄຸນສົມບັດ, ມີຄວາມຮູ້, ມີຄວາມສາມາດ, ມີວິຊາຊີບ, ມີຄວາມຊຳນານງານໃນຫຼາກຫຼາຍສາຂາອາຊີບຕາມຄວາມຕ້ອງການຂອງຕະຫຼາດແຮງງານ ເພື່ອຕອບສະໜອງຄວາມຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມຂອງປະເທດຊາດໃນໄລຍະໃໝ່, ສາມາດເຊື່ອມໂຍງ ແລະ ແຂ່ງຂັນກັບພາກພື້ນ ແລະ ສາກົນ ເທື່ອລະກ້າວ.

3. ສ້າງເງື່ອນໄຂ ແລະ ສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ການພັດທະນາຊັບພະຍາກອນມະນຸດ ດ້ວຍການສືບຕໍ່ກໍ່ສ້າງ, ປັບປຸງພື້ນຖານໂຄງລ່າງໃຫ້ທົ່ວສັງຄົມສາມາດເຂົ້າເຖິງການບໍລິການທາງດ້ານການສຶກສາ, ສາທາລະນະສຸກ, ແຮງງານ ແລະ ສະຫວັດດີການສັງຄົມ ຢ່າງທົ່ວເຖິງ; ກໍ່ສ້າງບຳລຸງ ຄູ, ແພດໝໍ, ນາຍຊ່າງທີ່ມີສີມືແຮງງານ, ປູກຝັງລ້ຽງສັດ ໃຫ້ມີຄວາມຮູ້ຄວາມສາມາດ ເພື່ອສ້າງຄວາມເຊື່ອໝັ້ນໃຫ້ແກ່ຜູ້ປະກອບການກໍຄືສັງຄົມ ເທື່ອລະກ້າວ.

4. ສືບຕໍ່ຄົ້ນຄວ້າປະຕິບັດນະໂຍບາຍເພີ່ມເງິນເດືອນ ຫຼື ເງິນຄ່າຄອງຊີບໃຫ້ແກ່ພະນັກງານ-ລັດຖະກອນ ແລະ ປັບປຸງຄ່າແຮງງານຂັ້ນຕ່ຳໃຫ້ສາມາດກຸ້ມກິນ ຈຶ່ງຈະສາມາດດຶງດູດໃຫ້ມີຄົນມາເຂົ້າຮຽນ ແລະ ຫຼຸດຜ່ອນການປະລະການຮຽນ ໄປອອກແຮງງານຢູ່ຕ່າງປະເທດ.

# ພິທີມອບ-ຮັບນົມສາລີຫວານ



(ສພຊ) - ເພື່ອເປັນເຄື່ອງດື່ມບຳລຸງໃຫ້ແກ່ສະມາຊິກສະພາແຫ່ງຊາດ ໃນການປະຕິບັດໜ້າທີ່ຕາມສິດ ແລະ ພາລະບົດບາດຂອງຕົນ; ວັນທີ 25 ພະຈິກຜ່ານມາ ທີ່ສະພາແຫ່ງຊາດ ໄດ້ມີພິທີມອບ-ຮັບນົມສາລີຫວານຈາກບໍລິສັດອຸດສາຫະກຳ-ກະສິກຳ ຈຳກັດ ຈຳນວນ 1,000 ຕຸກລວມມູນຄ່າ 9 ລ້ານກີບ ໃຫ້ແກ່ສະພາແຫ່ງຊາດ, ຕາງໜ້າກ່າວມອບໂດຍທ່ານ ຫຼູມຄຳ ວົງໄຊ ປະທານບໍລິສັດດັ່ງກ່າວ ແລະ ຕາງໜ້າກ່າວຮັບໂດຍທ່ານ ນາງ ອຳໄພວອນ ລ້ອມບຸນແພງ ເລຂາທິການສະພາແຫ່ງຊາດ ເຊິ່ງມີພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມເປັນສັກຂີພະຍານ.

ທ່ານ ນາງ ອຳໄພວອນ ລ້ອມບຸນແພງ ໄດ້ສະແດງຄວາມຂອບໃຈ ພ້ອມທັງມອບໃບຍ້ອງຍໍຂອງຄະນະເລຂາທິການສະພາແຫ່ງຊາດ ເພື່ອເປັນການຍ້ອງຍໍຜົນງານດີເດັ່ນໃນການປະກອບສ່ວນຊຸກຍູ້ ແລະ ອຸປະຖຳຄັ້ງນີ້.

**(ນາງ ອາລິນ ສຸພົມມະປະດິດ)**

# ບາງຂໍ້ສະເໜີຕໍ່ລັດຖະບານ ປັບປຸງແກ້ໄຂວຽກງານ 3 ສ້າງ



(ສພຊ) - ເພື່ອຮັບປະກັນການຈັດຕັ້ງປະຕິບັດວຽກງານ 3 ສ້າງໃນຕໍ່ໜ້າ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງກວ່າເກົ່າ; ວາລະການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX ເມື່ອວັນທີ 21 ພະຈິກຜ່ານມາ, ທ່ານ ຄຳຈັນ ໂສຕາປະເສີດ ປະທານກຳມາທິການບັນດາເຜົ່າ ຕາງໜ້າຄະນະປະຈຳສະພາແຫ່ງຊາດ ໄດ້ມີບາງຂໍ້ສະເໜີໃຫ້ລັດຖະບານພິຈາລະນາ ແລະ ປັບປຸງແກ້ໄຂ ດັ່ງນີ້:

1. ຕັ້ງໜ້າຈັດຕັ້ງຜັນຂະຫຍາຍມະຕິສະບັບເລກທີ 05/ຄບສພ ວ່າດ້ວຍການສືບຕໍ່ຍູ້ແຮງການຜັນຂະຫຍາຍແນວທາງປ່ຽນແປງໃໝ່; ສ້າງການຫັນປ່ຽນທີ່ແຂງແຮງ, ເລິກເຊິ່ງ ແລະ ຮອບດ້ານ ໃນການນຳພາຂອງພັກ (ເຊິ່ງຈະໄດ້ກຳນົດຕາແສງ ເປັນອົງການປົກຄອງທ້ອງຖິ່ນຂັ້ນຕ່ຳສຸດ ແລະ ບ້ານເປັນຫົວໜ່ວຍຊຸມຊົນ).

2. ປັບປຸງບາງມາດຕາຂອງກົດໝາຍທີ່ກ່ຽວຂ້ອງຂອງຂະແໜງການກ່ຽວກັບວຽກງານ 3 ສ້າງ ໃຫ້ລະອຽດ, ຮັດກຸມ ໂດຍສະເພາະການກຳນົດໜ້າທີ່ ແລະ ສິດຂອງອົງການຄຸ້ມຄອງມະຫາພາກ.

3. ສ້າງເພີ່ມ ຫຼື ປັບປຸງນິຕິກຳໃຕ້ກົດໝາຍ ກ່ຽວກັບການແບ່ງຂັ້ນຄຸ້ມຄອງ, ໜ້າທີ່ ແລະ ສິດ ລະອຽດ, ຮັດກຸມ ລະຫວ່າງຂະແໜງການຂັ້ນສູນກາງກັບທ້ອງຖິ່ນ.

4. ສ້າງຕັ້ງຄະນະຮັບຜິດຊອບວຽກງານ 3 ສ້າງ ໂດຍມີທ່ານຮອງນາຍົກລັດຖະມົນຕີເປັນຜູ້ຊີ້ນຳ-ນຳພາແລະກະຊວງພາຍໃນເປັນເສນາທິການປະຈຳການ.

5. ຈັດຕັ້ງການປະເມີນຜົນ ແລະ ຕີລາຄາຢ່າງພາວະວິໄສ ເປັນລະບົບຄົບຊຸດຄືນໃໝ່ກ່ຽວກັບວຽກງານ 3 ສ້າງ ໂດຍອີງໃສ່ຄາດໝາຍຂອງແຕ່ລະດ້ານ ແລະ ຕົວຊີ້ບອກ ຕາມຄຳສັ່ງຂອງນາຍົກລັດຖະມົນຕີ ເລກທີ 34/ນຍ, ລົງວັນທີ 23 ສິງຫາ 2016.

6. ປັບປຸງວິທີການ ແລະ ກົນໄກ ໃນການຈັດຕັ້ງປະຕິບັດການແບ່ງຂັ້ນຄຸ້ມຄອງວຽກງານໂຄງການ, ການຄຸ້ມຄອງລາຍຮັບ-ລາຍຈ່າຍ, ວຽກພະນັກງານຕາມສາຍຕັ້ງ-ສາຍຂວາງ ລະຫວ່າງສູນກາງກັບແຂວງ, ແຂວງກັບເມືອງ, ເມືອງກັບບ້ານ ໃຫ້ລະອຽດຈະແຈ້ງຂາດຕົວ ແລະ ສາມາດຈັດຕັ້ງປະຕິບັດໄດ້.

7. ຫັນພະນັກງານລົງຊ່ວຍທ້ອງຖິ່ນ ເພື່ອຍົກສູງຄວາມເປັນເຈົ້າການແລະສາມາດຮອງຮັບວຽກງານຕ່າງໆທີ່ສູນກາງມອບໝາຍໃຫ້ແຂວງ, ແຂວງມອບໃຫ້ເມືອງ, ເມືອງມອບໃຫ້ບ້ານ.

8. ສູນກາງເພີ່ມທະວີການປະຕິບັດບົດບາດການຄຸ້ມຄອງມະຫາພາກ, ຕິດຕາມກວດກາແລະຊຸກຍູ້ທ້ອງຖິ່ນຮາກຖານຕາມຂະແໜງການສາຍຕັ້ງຂອງຕົນ, ກຳນົດໜ້າວຽກ ແລະ ກົນໄກການຈັດຕັ້ງປະຕິບັດໃຫ້ລະອຽດເພື່ອໃຫ້ທ້ອງຖິ່ນມີຄວາມເປັນເອກະພາບໃນຂອບເຂດທົ່ວປະເທດ.

9. ອົງການກວດກາແຫ່ງລັດຂັ້ນສູນກາງ ແລະ ທ້ອງຖິ່ນ, ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ຍົກສູງການປະຕິບັດພາລະບົດບາດ, ສິດ, ໜ້າທີ່ ໃນການຕິດຕາມກວດກາແລະຊຸກຍູ້ການຈັດຕັ້ງປະຕິບັດວຽກງານ 3 ສ້າງ ໃຫ້ມີປະສິດທິພາບ, ປະສິດທິຜົນສູງຂຶ້ນກວ່າເກົ່າ.

10. ສະເໜີນຳເອົາຜົນການຈັດຕັ້ງປະຕິບັດວຽກງານ 3 ສ້າງ ເຂົ້າໃນບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມໃນແຕ່ລະໄລຍະ.

# ປະທານກຳມາທິການກົດໝາຍ ພົບປະ ຮອງປະທານສະພາຜູ້ແທນປະຊາຊົນແຂວງຊານຊີ



(ສພຊ) - ວັນທີ 22 ພະຈິກນີ້ ທີ່ສະພາແຫ່ງຊາດ, ສະຫາຍ ຄຳແພງ ວິລະພັນ ປະທານກຳມາທິການກົດໝາຍ ໄດ້ພົບປະກັບສະຫາຍ ເຫີ ທຽນຊາຍ ຮອງປະທານຄະນະປະຈຳສະພາຜູ້ແທນປະຊາຊົນແຂວງຊານຊີ ແຫ່ງ ສປຈີນພ້ອມດ້ວຍຄະນະ ໃນໂອກາດມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປລາວ ລະຫວ່າງວັນທີ 21-23 ພະຈິກ 2024 ເຊິ່ງເປັນການປະກອບສ່ວນຮັດແໜ້ນ ແລະ ເສີມຂະຫຍາຍສາຍພົວພັນມິດຕະພາບອັນເປັນມູນເຊື້ອ ແລະ ຄູ່ຮ່ວມຍຸດທະສາດຮອບດ້ານໝັ້ນຄົງຍາວນານ ຕາມທິດ 4 ດີ ລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ແລະ ການເປັນຄູ່ຮ່ວມຊາຕາກຳສັງຄົມນິຍົມ ລາວ-ຈີນ, ຈີນ-ລາວ ໃຫ້ນັບມື້ເປັນຮູບປະທຳ ແລະ ນຳເອົາຜົນປະໂຫຍດສູງສຸດມາສູ່ປະຊາຊົນສອງຊາດ.

ໃນການພົບປະ, ສອງຝ່າຍໄດ້ແຈ້ງສະພາບການທີ່ພົ້ນເດັ່ນຂອງອົງການນິຕິບັນຍັດ ແລະ ການເຄື່ອນໄຫວວຽກງານຂອງກຳມາທິການກົດໝາຍແລະສະພາຜູ້ແທນປະຊາຊົນແຂວງຊານຊີ ໃຫ້ກັນ ແລະ ກັນຊາບໂດຍຫຍໍ້ ພ້ອມທັງຮ່ວມກັນຕີລາຄາສູງຕໍ່ຜົນຂອງການພົບປະເຮັດວຽກລະຫວ່າງສະພາປະຊາຊົນແຂວງຫຼວງພະບາງ ແລະ ສະພາຜູ້ແທນປະຊາຊົນແຂວງຊານຊີໂດຍໄດ້ຮ່ວມກັນປຶກສາຫາລືສ້າງບົດບັນທຶກການຮ່ວມມືລະຫວ່າງສະພາປະຊາຊົນແຂວງຫຼວງພະບາງ ກັບສະພາຜູ້ແທນປະຊາຊົນແຂວງຊານຊີ ແນໃສ່ເພີ່ມທະວີ ແລະ ຊຸກຍູ້ການພົວພັນຮ່ວມມື, ການແລກປ່ຽນຄະນະຜູ້ແທນ, ການປະສານງານ, ການແລກປ່ຽນຂໍ້ມູນຂ່າວສານແລະບົດຮຽນເຊິ່ງກັນ ແລະ ກັນ ລະຫວ່າງສອງອົງການນິຕິບັນຍັດຂັ້ນທ້ອງຖິ່ນ ໃຫ້ເປັນຮູບປະທຳ ແລະ ນຳເອົາປະໂຫຍດມາສູ່ປະຊາຊົນຢ່າງແທ້ຈິງ. ສຳລັບທິດທາງການຮ່ວມມືໃນຕໍ່ໜ້າ, ກຳມາທິການກົດໝາຍ ແລະ ສະພາຜູ້ແທນປະຊາຊົນແຂວງຊານຊີ ຈະເປັນເສນາທິການໃນການຈັດຕັ້ງຜັນຂະຫຍາຍຂໍ້ຕົກລົງວ່າດ້ວຍການຮ່ວມມືລະຫວ່າງສະພາແຫ່ງຊາດລາວ ກັບ ສະພາຜູ້ແທນປະຊາຊົນທົ່ວປະເທດຈີນ ໂດຍສະເພາະສືບຕໍ່ແລກປ່ຽນຄະນະຜູ້ແທນຂັ້ນຕ່າງໆ ທີ່ຕິດພັນກັບການແລກປ່ຽນບົດຮຽນ ແລະ ປະສົບການກ່ຽວກັບການປະຕິບັດພາລະບົດບາດນິຕິບັນຍັດ; ຝ່າຍຈີນຈະສືບຕໍ່ໃຫ້ການຊ່ວຍເຫຼືອ ແລະ ພັດທະນາຊັບພະຍາກອນມະນຸດແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນທ້ອງຖິ່ນຂອງ ສປປລາວ.

ຄະນະຜູ້ແທນສະພາຜູ້ແທນປະຊາຊົນແຂວງຊານຊີ ຍັງໄດ້ເຂົ້າຢ້ຽມຂ່ຳນັບສະຫາຍ ຄຳໃບ ດຳລັດ ຮອງປະທານສະພາແຫ່ງຊາດ, ພົບປະເຮັດວຽກກັບສະຫາຍ ປອ. ອານຸພາບ ຕຸນາລົມ ປະທານສະພາປະຊາຊົນນະຄອນຫຼວງວຽງຈັນ, ຢ້ຽມຊົມຫໍພິພິທະພັນ ແລະ ປູຊະນີຍະສະຖານສຳຄັນຢູ່ນະຄອນຫຼວງວຽງຈັນ.

**(ນາງ ອາລິນ ສຸພົມມະປະດິດ)**

# ມອບນ້ຳດື່ມຊຸກຍູ້ກອງປະຊຸມສະໄໝສາມັນເທື່ອທີ 8




(ສພຊ) - ວັນທີ 20 ພະຈິກນີ້ ທີ່ສະພາແຫ່ງຊາດ (ສພຊ) ໄດ້ມີພິທີມອບ-ຮັບນ້ຳດື່ມແຮ່ທາດມິນີໂຣ ຈຳນວນ 500 ແພັກ ລວມມູນຄ່າ 100 ລ້ານກີບ ຈາກໂຮງງານນ້ຳດື່ມ ແຮ່ທາດມິນີໂຣ (ກຸ່ມບໍລິສັດ DSK ຈຳກັດ) ເພື່ອປະກອບສ່ວນຊຸກຍູ້ກອງປະຊຸມສະໄໝສາມັນເທື່ອທີ 8 ຂອງ ສພຊ ຊຸດທີ IX, ຕາງໜ້າມອບໂດຍທ່ານ ບຸນໄທ ວັນນະວົງ ຜູ້ຈັດການການຈັດຕັ້ງກຸ່ມບໍລິສັດ DSK ຈຳກັດ ແລະ ຕາງໜ້າຮັບໂດຍທ່ານ ປອ. ອາຄົມ ປຣະເສີດ ຮອງຄະນະເລຂາທິການສະພາແຫ່ງຊາດ ເຊິ່ງມີພາກສ່ວນກ່ຽວຂ້ອງເຂົ້າຮ່ວມເປັນສັກຂີພະຍານ.

ທ່ານ ປອ. ອາຄົມ ປຣະເສີດ ໄດ້ມອບໃບຊົມເຊີຍຂອງຄະນະເລຂາທິການສະພາແຫ່ງຊາດ ໃຫ້ໂຮງງານນ້ຳດື່ມ ແຮ່ທາດມິນີໂຣ (ກຸ່ມບໍລິສັດ DSK ຈຳກັດ) ທີ່ມີຜົນງານດີເດັ່ນໃນການປະກອບສ່ວນໃນຄັ້ງນີ້.

**(ນາງ ກຸກກິກ ບຸດດາໄຊ)**

# ປະທານ ກຕທ ຕ້ອນຮັບທູດທີ່ຖືກແຕ່ງຕັ້ງໄປປະຈຳການ



(ສພຊ) - ວັນທີ 20 ພະຈິກຜ່ານມາ ທີ່ຫ້ອງຮັບແຂກສະພາແຫ່ງຊາດ, ທ່ານ ສັນຍາ ປຣະເສີດ ປະທານກຳມາທິການການຕ່າງປະເທດ (ກຕທ) ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງບັນດາທ່ານເອກອັກຄະລັດຖະທູດໃນນາມຕົວແທນຂອງ ສປປລາວ ທີ່ຖືກແຕ່ງຕັ້ງໄປປະຈຳການຢູ່ຕ່າງປະເທດ ນຳໂດຍທ່ານ ດາວວີ ວົງໄຊ ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ສປປລາວ ປະຈຳປະເທດສະວິດ ແລະ ທ່ານ ບຸນພຽງ ຈັນທະວົງ ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ສປປລາວ ປະຈຳ ສສ.ມຽນມາ.

ໃນການຕ້ອນຮັບ, ທ່ານ ສັນຍາ ປຣະເສີດ ໄດ້ສະແດງຄວາມຊົມເຊີຍເປັນຢ່າງສູງຕໍ່ບັນດາທ່ານເອກອັກຄະລັດຖະທູດໃນນາມຕົວແທນຂອງ ສປປລາວ ທີ່ຖືກແຕ່ງຕັ້ງໄປປະຈຳການຢູ່ສອງປະເທດ ທັງສະແດງຄວາມເຊື່ອໝັ້ນວ່າ ດ້ວຍບົດຮຽນ ແລະ ປະສົບການທາງດ້ານການທູດຂອງບັນດາທ່ານ ຈະເຮັດໃຫ້ການປະຕິບັດໜ້າທີ່ທາງການທູດ ກໍຄືການເປັນຂົວຕໍ່ອັນສຳຄັນໃນການຊຸກຍູ້ ແລະ ສົ່ງເສີມສາຍພົວພັນມິດຕະພາບແລະການຮ່ວມມືອັນດີງາມລະຫວ່າງ ສປປລາວ ແລະ ຕ່າງປະເທດ ເວົ້າລວມ, ເວົ້າສະເພາະ ລະຫວ່າງອົງການນິຕິບັນຍັດຂອງລາວ ແລະ ຕ່າງປະເທດ ໄດ້ຮັບການເສີມຂະຫຍາຍຍິ່ງໆຂຶ້ນ. ທ່ານຍັງໄດ້ໃຫ້ຂໍ້ມູນກ່ຽວກັບສະພາແຫ່ງຊາດ ພ້ອມທັງແຈ້ງໃຫ້ຊາບການພົວພັນຮ່ວມມື ແລະ ທິດທາງລະຫວ່າງສະພາແຫ່ງຊາດລາວ ແລະ ລັດຖະສະພາຕ່າງປະເທດເຊິ່ງຈະສືບຕໍ່ຄົ້ນຄວ້າ ແລະ ເຊັນບົດບັນທຶກວ່າດ້ວຍການຮ່ວມມືລະຫວ່າງສະພາແຫ່ງຊາດລາວ ກັບ ລັດຖະສະພາຕ່າງປະເທດ ໂດຍສະເພາະແມ່ນກັບລັດຖະສະພາປະເທດເພື່ອນມິດຍຸດທະສາດ ເພື່ອຊຸກຍູ້ສົ່ງເສີມ ແລະ ເປີດກວ້າງການພົວພັນຮ່ວມມືບົນພື້ນຖານແນວທາງການຕ່າງປະເທດຂອງພັກ-ລັດເຮົາ; ແລກປ່ຽນຄະນະຜູ້ແທນຂັ້ນສູງ ແລະ ຂັ້ນຕ່າງໆຂອງສະພາແຫ່ງຊາດ, ຄະນະມິດຕະພາບລັດຖະສະພາລາວ ກັບ ຕ່າງປະເທດ ແລະ ສະພາປະຊາຊົນຂັ້ນແຂວງ ກັບ ລັດຖະສະພາຕ່າງປະເທດ ເພື່ອຢ້ຽມຢາມ, ເຮັດວຽກ

ອ່ານຕໍ່ໜ້າ 9



## ສະຫາຍ ຄຳໃບ...

(ຕໍ່ຈາກໜ້າ 1)

ແລະ ປະສົບການອັນລ້ຳຄ່າ ທີ່ຕິດພັນກັບພາລະບົດບາດ, ສິດແລະໜ້າທີ່ຂອງສອງສະພາ ເຊິ່ງໄດ້ປະກອບສ່ວນສຳຄັນໃນການຮັດແໜ້ນແລະເສີມຂະຫຍາຍສາຍພົວພັນມິດຕະພາບອັນເປັນມູນເຊື້ອ ແລະ ຄູ່ຮ່ວມຍຸດທະສາດຮອບດ້ານ ໝັ້ນຄົງ ຍາວນານ ຕາມທິດ 4 ດີ ລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ແລະ ການເປັນຄູ່ຮ່ວມຊາຕາກຳສັງຄົມນິຍົມ ລາວ-ຈີນ, ຈີນ-ລາວ ໃຫ້ນັບມື້ເປັນຮູບປະທຳ ແລະ ແຕກດອກອອກຜົນຍິ່ງໆຂຶ້ນ.

ສະຫາຍ ເຫີ ທຽນຊາຍ ກໍໄດ້ສະແດງຄວາມຂອບໃຈຕໍ່ການຕ້ອນຮັບຢ່າງອົບອຸ່ນພ້ອມທັງລາຍງານຜົນການພົບປະເຮັດວຽກ ແລະ ແລກປ່ຽນບົດຮຽນກັບກຳມາທິການກົດໝາຍ, ແຈ້ງສະພາບການທີ່ພົ້ນເດັ່ນໂດຍຫຍໍ້ຂອງແຂວງ ແລະການປະຕິບັດພາລະບົດບາດຂອງສະພາຜູ້ແທນປະຊາຊົນແຂວງຊານຊີ ໃຫ້ຮັບຊາບ.

**(ນາງ ອາລິນ ສຸພົມມະປະດິດ)**

# ຮອງປະທານ ກກໝ ພົບປະ ຮອງລັດຖະມົນຕີກະຊວງຍຸຕິທຳຈີນ



(ສພຊ) - ວັນທີ 22 ພະຈິກ 2024 ສະຫາຍ ອຳໄພ ຈິດມານິນ ຮອງປະທານກຳມາທິການກົດໝາຍ (ກກໝ) ໄດ້ພົບປະເຮັດວຽກກັບສະຫາຍ ຫວັງເຈິ່ນຈຽງ ຮອງລັດຖະມົນຕີກະຊວງຍຸຕິທຳ ແຫ່ງ ສປຈີນ ພ້ອມດ້ວຍຄະນະ ໃນໂອກາດມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປລາວເຊິ່ງເປັນການປະກອບສ່ວນຮັດແໜ້ນ ແລະ ເສີມຂະຫຍາຍສາຍພົວພັນມິດຕະພາບອັນເປັນມູນເຊື້ອ ແລະ ຄູ່ຮ່ວມຍຸດທະສາດຮອບດ້ານໝັ້ນຄົງຍາວນານ ຕາມທິດ 4 ດີ ລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ແລະ ການເປັນຄູ່ຮ່ວມຊາຕາກຳສັງຄົມນິຍົມ ລາວ-ຈີນ, ຈີນ-ລາວ ໃຫ້ນັບມື້ນັບຂະຫຍາຍຕົວ, ເກີດດອກອອກຜົນຍິ່ງຂຶ້ນກວ່າເກົ່າ ແລະ ນຳເອົາຜົນປະໂຫຍດຕົວຈິງມາສູ່ປະຊາຊົນສອງຊາດ.

ໃນການພົບປະ, ສອງຝ່າຍໄດ້ແຈ້ງໃຫ້ກັນຊາບໂດຍຫຍໍ້ກ່ຽວກັບພາລະບົດບາດ, ການເຄື່ອນໄຫວວຽກງານຂອງກຳມາທິການກົດໝາຍ ແລະ ກົນໄກການພົວພັນລະຫວ່າງ ກກໝ ກັບກະຊວງຍຸຕິທຳ ຂອງ ສປປລາວ; ພາລະບົດບາດ, ການເຄື່ອນໄຫວວຽກງານຂອງກະຊວງຍຸຕິທຳ ແລະ ກົນໄກການພົວພັນລະຫວ່າງກະຊວງຍຸຕິທຳກັບກຳມາທິການລັດຖະທຳມະນູນ ແລະ ກົດໝາຍ ຂອງສະພາຜູ້ແທນປະຊາຊົນທົ່ວປະເທດຈີນ. ພ້ອມທັງຕີລາຄາສູງຕໍ່ຜົນການພົບປະສອງຝ່າຍລະຫວ່າງສອງຮອງລັດຖະມົນຕີກະຊວງຍຸຕິທຳ ແລະ ການລົງນາມຮ່ວມກັນໃນບົດບັນທຶກຄວາມເຂົ້າໃຈ (MOU) ວ່າດ້ວຍການຮ່ວມມືລະຫວ່າງສອງກະຊວງຍຸຕິທຳລາວ-ຈີນ ເຊິ່ງຈະເປັນນິຕິກຳບ່ອນອີງໃຫ້ແກ່ສອງກະຊວງ ໃນການຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນສູງຂຶ້ນ.

**(ນາງ ອາລິນ ສຸພົມມະປະດິດ)**



## 6 ຄຳເຫັນ...

(ຕໍ່ຈາກໜ້າ 1)

1. ໃຫ້ເອົາໃຈໃສ່ຄົ້ນຄວ້າ, ວິເຄາະວິໄຈບັນຫາທີ່ຍັງເປັນຂໍ້ຄົງຄ້າງ, ເປັນອຸປະສັກແລະເປັນຂອດອຸດຕັນ ໃນການຈັດຕັ້ງປະຕິບັດວາລະແຫ່ງຊາດໃນໄລຍະຜ່ານມາ ໃຫ້ຮູ້ສາເຫດຢ່າງລະອຽດ, ຈະແຈ້ງ; ຈາກນັ້ນ ໃຫ້ກຳນົດວິທີການ ແລະ ມາດຕະການແກ້ໄຂ ໃຫ້ບັນລຸໃນລະດັບທີ່ແນ່ນອນ ຈຶ່ງຈະສ້າງໄດ້ກຳລັງແຮງອັນແທ້ຈິງໃຫ້ແກ່ການສືບຕໍ່ຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດແຕ່ນີ້ຫາປີ 2025 ໃຫ້ມີປະສິດທິພາບແລະປະສິດທິຜົນ.

2. ສືບຕໍ່ໂຄສະນາສ້າງຄວາມຮັບຮູ້ທາງດ້ານກົດໝາຍ ແລະ ຜົນຮ້າຍຂອງບັນຫາຢາເສບຕິດໃຫ້ທົ່ວເຖິງທຸກເປົ້າໝາຍໃນສັງຄົມ ໂດຍສະເພາະແມ່ນບັນດາເປົ້າໝາຍທີ່ເປັນກຸ່ມສ່ຽງ, ບ່ອນຫ່າງໄກສອກຫຼີກ, ທຸລະກັນດານ ໂດຍນຳໃຊ້ກຳລັງສັງລວມຂອງທົ່ວປວງຊົນ, ໃນນັ້ນ ສະຖາບັນຄອບຄົວ, ອົງການຈັດຕັ້ງພັກ-ລັດ, ອົງການຈັດຕັ້ງມະຫາຊົນ ແລະ ປະຊາຊົນບັນດາເຜົ່າທຸກຊັ້ນຄົນ ເປັນຫຼັກແຫຼ່ງ ຈຶ່ງຈະເຮັດໃຫ້ວຽກງານໂຄສະນາເຜີຍແຜ່ກົດໝາຍ, ຜົນຮ້າຍຂອງບັນຫາຢາເສບຕິດໄດ້ເຄື່ອນໄຫວຢ່າງແຂງແຮງ, ສັງຄົມມີການຫັນປ່ຽນຢ່າງແທ້ຈິງ.

3. ກວດກາຄືນບັນດາກົດໝາຍ ແລະ ນິຕິກຳໃຕ້ກົດໝາຍທີ່ກ່ຽວຂ້ອງ ອັນໃດບໍ່ທັນມີ ຫຼື ບໍ່ສອດຄ່ອງ ໂດຍສະເພາະນິຕິກຳທີ່ເປັນບ່ອນອີງໃຫ້ແກ່ການຈັດຕັ້ງປະຕິບັດໂທດຕໍ່ຜູ້ກະທຳຜິດກ່ຽວກັບຢາເສບຕິດທີ່ເກີດຂຶ້ນໃໝ່ ໃຫ້ຊຸ້ນຂ້ຽວ ສ້າງ ຫຼື ປັບປຸງໃຫ້ສຳເລັດໂດຍໄວ ເພື່ອຮອງຮັບໃຫ້ແກ່ການຕັດສິນຄະດີເປັນໄປຕາມກົດໝາຍກຳນົດໄວ້.

4. ເອົາໃຈໃສ່ປັບປຸງ ແລະ ເຝິກອົບຮົມທັກສະດ້ານການເປັນມືອາຊີບ ໃຫ້ແກ່ກຳລັງ ປກສ ຫຼາຍຂຶ້ນ ແລະ ເປັນປົກກະຕິ, ຕໍ່ເນື່ອງ ໂດຍສະເພາະແມ່ນກຳລັງ ປກສ ຂັ້ນເມືອງ, ຂັ້ນບ້ານ; ສະໜອງງົບປະມານ, ປະກອບພາຫະນະ, ອຸປະກອນຮັບໃຊ້ທີ່ຈຳເປັນ ເພື່ອໃຫ້ເຂົາເຈົ້າມີຄວາມສາມາດ ແລະ ເປັນເຈົ້າຕົນເອງໃນການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດຢູ່ຂັ້ນຮາກຖານ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນຫຼາຍຂຶ້ນ.

5. ເອົາໃຈໃສ່ຕິດຕາມກວດກາ ແລະ ສຶກສາອົບຮົມປະຊາຊົນ ໂດຍສະເພາະຢູ່ເຂດຫ່າງໄກສອກຫຼີກ, ທຸລະກັນ ດານ ບໍ່ໃຫ້ລັກລອບປູກຝິ່ນ ແລະ ພືດທີ່ມີສານເສບຕິດ ທັງຊຸກຍູ້ສົ່ງເສີມແລະຊ່ວຍເຫຼືອໃຫ້ເຂົາເຈົ້າໄດ້ເຂົ້າຮ່ວມໃນໂຄງການປູກພືດທົດແທນໃຫ້ຫຼາຍຂຶ້ນແລະຫັນເປັນອາຊີບແບບຖາວອນໝັ້ນຄົງ, ພ້ອມທັງຕິດຕາມກວດກາດຳເນີນມາດຕະການດ້ານກົດໝາຍຕໍ່ຜູ້ສະໜອງທຶນປູກຝິ່ນ ແລະ ພືດທີ່ມີສານເສບຕິດ ຢູ່ເບື້ອງຫຼັງຢ່າງເຂັ້ມງວດ.

6. ເພີ່ມທະວີຄວາມເປັນເຈົ້າການໃນການພົວພັນປະສານສົມທົບກັບບັນດາປະເທດໃກ້ຄຽງທີ່ມີຊາຍແດນຕິດຈອດກັບ ສປປລາວ ໂດຍສະເພາະແມ່ນປະເທດທີ່ຍັງມີພື້ນທີ່ແລະມີຄວາມສ່ຽງໃນການຂົນສົ່ງ, ຄ້າ-ຂາຍ ແລະ ເປັນບ່ອນຜະລິດຢາເສບຕິດ ເພື່ອຊອກຫາວິທີແກ້ໄຂຮ່ວມກັນໃຫ້ຫຼາຍຂຶ້ນ.

# ບາງຄຳເຫັນຂອງ ສສຊ ຕໍ່ບົດລາຍງານຂອງລັດຖະບານ

(ສພຊ) - ກອງປະຊຸມສະໄໝສາມັນເທື່ອທີ8ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ເມື່ອວັນທີ 18 ພະຈິກຜ່ານມາ,



**ທ່ານ ບຸນຕາ ເທບພະວົງ ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ** ໄດ້ປະກອບຄຳເຫັນຕໍ່ບົດລາຍງານຂອງທ່ານນາຍົກລັດຖະມົນຕີ ແລະ ຄະນະລັດຖະບານ ໂດຍລົງເລິກວຽກຈຸດສຸມການປັບປຸງຄຸນນະພາບຂອງການສຶກສາ: ວຽກງານສຶກສາ ແມ່ນວຽກທີ່ສຳຄັນທີ່ສຸດຂອງພັກເພາະວ່າພັກເຮົາໄດ້ກຳນົດແຕ່ຫົວທີແຕ່ອະດີດຈົນມາຮອດປັດຈຸບັນວ່າໃຫ້ເອົາວຽກສຶກສາໄປກ່ອນທຸກວຽກບາດກ້າວໜຶ່ງ, ລັດຖະບານກໍໄດ້ເອົາໃຈໃສ່ຜັນຂະຫຍາຍ ແລະ ກຳນົດນະໂຍບາຍ 18% ທາງດ້ານງົບປະມານ, ສພຊ ກໍໄດ້ຮັບຮອງເອົາເປັນກົດໝາຍແລ້ວ; ແຕ່ໃນສະພາບຕົວຈິງການສຶກສາໄດ້ຮັບງົບປະມານພຽງ9-12%, ງົບປະມານ 18% ນີ້ ແມ່ນການຄົ້ນຄວ້າຂອງພາກສ່ວນກ່ຽວຂ້ອງເພື່ອສະໜອງສະເພາະວຽກສຶກສາທິການເທົ່ານັ້ນ; ແຕ່ໄລຍະຜ່ານມາ ການສຶກສາໄດ້ຮັບງົບບໍ່ຄົບຖ້ວນຕາມມະຕິສະພາແຫ່ງຊາດ ພັດເພີ່ມວຽກກິລາກາຍະກຳ, ວຽກພັດທະນາຊັບພະຍາກອນມະນຸດແຫ່ງຊາດ, ວຽກວິທະຍາສາດ ເຂົ້າຕື່ມອີກ ແຕ່ງົບກໍຍັງສໍ່າເກົ່າ. ສະພາບການດັ່ງກ່າວແມ່ນຕົ້ນເຫດອັນໜຶ່ງທີ່ກະທົບເປັນຕ່ອງໂສ້ຕໍ່ການສຶກສາແຕ່ຂັ້ນສູນກາງລົງຮອດທ້ອງຖິ່ນ, ຈຶ່ງເຮັດໃຫ້ສະພາບການສຶກສາຂອງບ້ານເຮົາໂດຍການຕີລາຄາຖືວ່າບໍ່ປົກກະຕິ; ສະນັ້ນ, ຈຶ່ງຂໍແລກປ່ຽນບາງບັນຫາດັ່ງນີ້:

1. ໃຫ້ລັດຖະບານເອົາຈິງເອົາຈັງສຸມໃສ່ຈັດຕັ້ງປະຕິບັດມະຕິກົມລົງຂອງຄະນະລັດຖະບານສະບັບເລກທີ09/ລບ ໂດຍມອບໃຫ້ທ່ານຮອງນາຍົກລັດຖະມົນຕີເປັນຜູ້ນຳພາຊີ້ນຳໂດຍກົງແຕ່ສູນກາງຮອດທ້ອງຖິ່ນ ໃຫ້ປະຕິຮູບ ແລະ ແກ້ໄຂບັນຫາລະບົບການສຶກສາໃຫ້ເປັນຮູບປະທຳ ແລ້ວລາຍງານຕໍ່ກອງປະຊຸມສະໄໝສາມັນເທື່ອທີ 9 ເທື່ອທີ 10 ໃນປີ 2025 ເຊິ່ງເປັນບັ້ນສຸດທ້າຍຂອງສູນກາງພັກ ສະໄໝທີ XI ແລະ ຂອງສະພາແຫ່ງຊາດ ຊຸດທີ IX ເປັນຂອງຂວັນໃຫ້ແກ່ພັກ ແລະ ສພຊ ກໍຄືປະຊາຊົນ. ອັນທີ 2 ປະຕິບັດງົບປະມານໃຫ້ຂະແໜງສຶກສາໃຫ້ຄົບຖ້ວນຕາມມະຕິຂອງ ສພຊ ກໍຄືກົດໝາຍ ຕາມຄວາມຮຽກຮ້ອງຂອງວຽກງານຕົວຈິງໃນປັດຈຸບັນ. ອັນທີ 3 ປັບປຸງກົງຈັກກະຊວງສຶກສາທິການ ແລະ ກິລາ ເຊິ່ງກະຊວງມີ4 ໜ້າວຽກໃຫຍ່: ສຶກສາທິການ, ກິລາກາຍະກຳ, ພັດທະນາຊັບພະຍາກອນມະນຸດແຫ່ງຊາດ, ວິທະຍາສາດ; ສະເໜີເອົາວຽກກິລາກາຍະກຳ ໄປຮວມເຂົ້າກັບຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ເປັນຄະນະຊາວໜຸ່ມ ແລະ ກິລາ ຫຼື ກະຊວງທ່ອງທ່ຽວ ແລະ ກິລາ ເພາະເໝາະສົມກັບປະເທດເຮົາໃນປັດຈຸບັນ, ປະເທດອາຊຽນຈຳນວນໜຶ່ງທີ່ເຂັ້ມແຂງ ເຂົາເຈົ້າກໍເຮັດແບບນັ້ນ; ເອົາວຽກພັດທະນາຊັບພະຍາກອນມະນຸດ ໄປຂຶ້ນກັບສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ໂດຍມີຄະນະຈັດຕັ້ງສູນກາງພັກຊີ້ນຳໂດຍກົງ ເພື່ອພັດທະນາຊັບພະຍາກອນມະນຸດໃຫ້ກ້າວຂຶ້ນ; ສະນັ້ນ, ກະຊວງດັ່ງກ່າວຈະມີຊື່ວ່າ ກະຊວງສຶກສາທິການ ແລະ ວິທະຍາສາດ.

2. ຍົກບົດບາດໃຫ້ທ້ອງຖິ່ນ, ແຂວງ ດ້ານການສຶກສາທິການ ແລະ ວິທະຍາສາດ ເປັນເຈົ້າການໂດຍກົງຮອບດ້ານ ໂດຍສະເພາະກຳນົດແຜນໂຄງການການສຶກສາ, ງົບປະມານ, ຫຼັກສູດການຮຽນ-ການສອນບາງຫຼັກສູດ ແລະ ບັນດາບຸຄະລາກອນຂອງທ້ອງຖິ່ນເອງ ໂດຍຜ່ານສະພາປະຊາຊົນຂັ້ນແຂວງເພື່ອເປັນການແຂ່ງຂັນດ້ານການສຶກສາວິທະຍາສາດ ໃນ 17 ແຂວງ ແລະ 1 ນະຄອນຫຼວງແຂ່ງຂັນກັນດ້ານການສຶກສາວ່າແຂວງໃດຈະເປັນຈຸດສຸມຈຸດເດັ່ນ; ເງິນເກີນແຜນຂອງແຕ່ລະແຂວງນັ້ນໃຫ້ອະນຸມັດສຸມໃສ່ການສຶກສາ, ວິທະຍາສາດ ແລະພື້ນຖານໂຄງລ່າງຂອງການສຶກສາ; ສ່ວນກະຊວງສຶກສາທິການ ແລະ ວິທະຍາສາດ ສຸມໃສ່ວາງແຜນດ້ານນະໂຍບາຍການຄຸ້ມຄອງ, ຕິດຕາມກວດກາມະຫາພາກ ແລະ ສືບຕໍ່ສ້າງຜູ້ທີ່ຮຽນຈົບຂັ້ນແຂວງເພື່ອໄປຄົ້ນຄວ້າຕໍ່ຕ່າງປະເທດ ຫຼື ເຂົ້າເຮັດວຽກຢູ່ບ່ອນຕ່າງໆ, ຍາດແຍ່ງການຊ່ວຍເຫຼືອຈາກສາກົນ ເພື່ອມາຊ່ວຍພື້ນຖານໂຄງລ່າງ ແລະຊ່ວຍການສຶກສາຢູ່ແຕ່ລະແຂວງເພື່ອໃຫ້ເປັນຮູບປະທຳ.

3. ດ້ານບຸຄະລາກອນການນຳພາ: ໃຫ້ມີກົມການເມືອງສູນກາງພັກ 1 ທ່ານ ເປັນຮອງນາຍົກຄວບຕຳແໜ່ງລັດຖະມົນຕີ ຊີ້ນຳນຳພາໂດຍກົງລົງເລິກວຽກງານການສຶກສາ ຫຼື ວິທະຍາສາດ ຢູ່ຂັ້ນທ້ອງຖິ່ນໃຫ້ເຂັ້ມແຂງໜັກແໜ້ນ, ກຳມະການສູນກາງພັກ 1 ທ່ານ ເປັນຮອງລັດຖະມົນຕີ ຜູ້ປະຈຳການ ເຮັດວຽກບໍລິຫານ ແລະການຕ່າງປະເທດດຶງດູດການຊ່ວຍເຫຼືອ, ກຳມະການສຳຮອງສູນກາງພັກ 1 ທ່ານ ເປັນຜູ້ລົງເລິກຊີ້ນຳວຽກງານມະຫາວິທະຍາໄລແຫ່ງຊາດ ແລະ ຮອງລັດຖະມົນຕີ 1 ທ່ານ ລົງເລິກວຽກງານການສຶກສາພາກສາມັນສຶກສາທົ່ວໄປ; ປະກອບເອົາສະມາຊິກສະພາແຫ່ງຊາດ 2-3 ທ່ານ ຄວບຕຳແໜ່ງຫົວໜ້າກົມຈັດຕັ້ງ ຫຼື ກົມກວດກາ ຫຼືເປັນອຳນວຍການໃຫຍ່ມະຫາວິທະຍາໄລແຫ່ງຊາດ, ເປັນ ສສຊ ຊ່ວຍລັດຖະບານແລ້ວ ຍັງຕິດຕາມກວດກາເພື່ອເປັນຂົວຕໍ່ໃຫ້ແກ່ສະພາແຫ່ງຊາດ.



(ສພຊ) - **ທ່ານ ຄຳຝອງ ອິນມານີ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 3 ແຂວງຫຼວງນ້ຳທາ** ໄດ້ມີຄຳເຫັນຕໍ່ບົດລາຍງານຂອງລັດຖະບານໃນວາລະການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX ເມື່ອວັນທີ 18 ພະຈິກ 2024 ເຊິ່ງມີເນື້ອໃນບາງຕອນວ່າ: ແຂວງຫຼວງນ້ຳທາ ມີໂຄງການເປົ້າໝາຍສະເພາະຂອງລັດຖະບານຄືເສັ້ນທາງປູຢາງ 2 ຊັ້ນ ຈາກເທດສະບານແຂວງໄປຮອດເມືອງວິລະຊົນ ກໍຄືເມືອງນາແລ, ຜ່ານການຈັດຕັ້ງປະຕິບັດແຂວງໄດ້ສະເໜີດັດແກ້ຫົວໜ່ວຍລາຄາໃຊ້ເວລາດົນພໍສົມຄວນ ມາຮອດປັດຈຸບັນກໍບໍ່ທັນໄດ້ດັດແກ້ເທື່ອ, ມູນຄ່າໂຄງການທີ່ສະເໜີດັດແກ້ໄລຍະນັ້ນ ມາຮອດປັດຈຸບັນ ບາງເທື່ອອາດຈະເປັນໄປບໍ່ໄດ້ອີກແລ້ວ. ສະນັ້ນ, ຈຶ່ງຂໍສະເໜີໃຫ້ລັດຖະບານຮີບຮ້ອນດັດແກ້ງົບປະມານໂຄງການດັ່ງກ່າວຄືນເພື່ອສາມາດຈັດຕັ້ງປະຕິບັດໃຫ້ສຳເລັດໂດຍໄວ; ນອກຈາກຈະດັດແກ້ແລ້ວ, ກໍຂໍໃຫ້ສືບຕໍ່ຈັດສັນງົບປະມານໃຊ້ວຽກທີ່ຈັດຕັ້ງປະຕິບັດສຳເລັດຕາມຕົວຈິງທີ່ພວກເຮົາໄດ້ເຮັດກ່ອນ, ຜ່ານມາຈັດສັນຂອນຂ້າງໜ້ອຍ.

ສະເໜີລັດຖະບານຮີບຮ້ອນກວດກາ ແລະ ລົງທຶນໃສ່ການກໍ່ສ້າງພື້ນຖານໂຄງລ່າງໂດຍສະເພາະແມ່ນເຂດເຊື່ອມຕໍ່ເຊື່ອມຈອດລະຫວ່າງແຂວງຫຼວງນ້ຳທາທາຊາຍແດນບໍ່ເຕັນ, ຈາກບໍ່ເຕັນໄປຮອດນາເຕີຍທາເສັ້ນທາງລົດໄຟ ເຊິ່ງຈຸດດັ່ງກ່າວເສັ້ນທາງເປ່ເພຫຼາຍທີ່ສຸດ; ດ່ານບໍ່ເຕັນ ເປັນດ່ານພາສີໜຶ່ງທີ່ເກັບລາຍງານເຂົ້າງົບປະມານຫຼາຍພໍສົມຄວນ ມາຮອດເດືອນ 10 ປີນີ້ເກີນ656 ກວ່າຕື້ກີບແລ້ວ, ສະນັ້ນ ຖ້າເຮົາສຸມໃສ່ແກ້ໄຂພື້ນຖານໂຄງລ່າງ ເຊື່ອວ່າການຈັດເກັບລາຍຮັບງົບປະມານຈະໄດ້ຫຼາຍກວ່າ.

(ສພຊ)- **ທ່ານ ສິມພອນ ສີອຸດົມພັນ ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 6 ແຂວງຫຼວງພະບາງ** ໄດ້ປະກອບຄຳເຫັນຕໍ່ບົດລາຍງານຂອງທ່ານນາຍົກລັດຖະມົນຕີ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ ປະຈຳປີ 2024 ແລະ ແຜນການປະຈຳປີ 2025; ແຜນການລົງທຶນຂອງລັດ, ແຜນຈັດສັນງົບປະມານ ປະຈຳປີ 2025 ເຊິ່ງມີບາງຕອນວ່າ: ດ້ວຍຄວາມພະຍາຍາມຂອງລັດຖະບານ ເຫັນໄດ້ວ່າບັນລຸຜົນໃນຫຼາຍດ້ານ; ສຳລັບເຂດເລືອກຕັ້ງທີ 6 ກໍມີຜົນ




ສຳເລັດເຊັ່ນດຽວກັນ ອັນພົ້ນເດັ່ນແມ່ນສາມາດເກັບລາຍຮັບໄດ້ແລ້ວ125%, ການທ່ອງທ່ຽວກໍຂະຫຍາຍຕົວ, ມາຮອດເດືອນຕຸລາ ມີນັກທ່ອງທ່ຽວເຂົ້າມາທ່ຽວຫຼວງພະບາງ 1.7 ລ້ານກວ່າເທື່ອຄົນ.

ຜ່ານການຕິດຕາມກວດກາຂອງຄະນະ ສສຊ ກໍຍັງເຫັນວ່າມີບັນຫາທີ່ຈະຕ້ອງເອົາໃຈໃສ່ເປັນຕົ້ນແມ່ນການຄຸ້ມຄອງລາຄາສິນຄ້າ, ການຜະລິດສິນຄ້າຍັງບໍ່ທັນເປັນຂະບວນຢ່າງແຂງແຮງ, ການລັກລອບອະນຸຍາດ ແລະ ການຄຸ້ມຄອງການຂຸດຄົ້ນແຮ່ທາດ ຍັງບໍ່ທັນຮັດກຸມ ພາໃຫ້ເກີດມີປາກົດການຫຍໍ້ທໍ້ຫຼາຍຢ່າງ, ບັນຫາທີ່ໜ້າເປັນຫ່ວງຢ່າງໜຶ່ງກໍແມ່ນວຽກການສຶກສາ ມີທ່າອຽງຖົດຖອຍ, ປາກົດການຫຍໍ້ທໍ້ຫຼາຍກໍລະນີຍັງບໍ່ທັນໄດ້ຮັບການແກ້ໄຂຢ່າງເດັດຂາດເຂັ້ມງວດ ເປັນຕົ້ນການອະນຸຍາດຂຸດຄົ້ນແຮ່ທາດຊະຊາຍ, ບັນຫາຢາເສບຕິດ ແລະ ອື່ນໆ ເຊິ່ງບັນຫາທີ່ກ່າວມານັ້ນ ສະເໜີລັດຖະບານເອົາໃຈໃສ່ແກ້ໄຂໃຫ້ເປັນຮູບປະທຳ.

ສຳລັບທິດທາງປີ 2025 ຢາກສະເໜີຕໍ່ລັດຖະບານບາງບັນຫາດັ່ງນີ້:

1. ໃຫ້ມີທິດທາງລະອຽດໃນການຊຸກຍູ້ສົ່ງເສີມການຜະລິດສິນຄ້າພາຍໃນ, ໃນນີ້ ແມ່ນໃຫ້ເອົາໃຈໃສ່ຊຸກຍູ້ສົ່ງເສີມດ້ານວິຊາການ, ການນຳໃຊ້ເຕັກນິກວິຊາການໃໝ່ເຂົ້າໃນການຜະລິດ, ການດຳເນີນທຸລະກິດຕ່າງໆ.

2. ເອົາໃຈໃສ່ແກ້ໄຂຊີວິດການເປັນຢູ່ຂອງພະນັກງານ, ທະຫານ, ຕຳຫຼວດ ແລະ ປະຊາຊົນບັນດາເຜົ່າ ອັນສຳຄັນແມ່ນໃຫ້ເລັ່ງໃສ່ການສ້າງອາຊີບໝັ້ນທ່ຽງໃຫ້ແກ່ເຂົາເຈົ້າ, ຮີບຮ້ອນປະຕິບັດນະໂຍບາຍເພີ່ມເງິນເດືອນ, ນະໂຍບາຍຕ່າງໆໃຫ້ໄວເພື່ອແກ້ໄຂຄວາມຫຍຸ້ງຍາກຂອງພະນັກງານ, ທະຫານ, ຕຳຫຼວດ ແລະ ປະຊາຊົນບັນດາເຜົ່າ.

3. ສຸມທຶນຮອນເຂົ້າໃນການປັບປຸງ, ສ້ອມແປງເສັ້ນທາງທີ່ເປ່ເພ ໃຫ້ສາມາດທຽວໄດ້ສະດວກກວ່າເກົ່າ ເພາະເສັ້ນທາງຫຼວງແຫ່ງຊາດທີ່ຜ່ານແຂວງຫຼວງພະບາງກໍເປ່ເພຊຸດໂຊມ; ໄລຍະຜ່ານມາທາງກະຊວງໂຍທາທິການ ແລະ ຂົນສົ່ງກໍໄດ້ມີຄວາມພະຍາຍາມແກ້ໄຂ, ແຕ່ກໍຢາກໃຫ້ລັດຖະບານຊ່ວຍແກ້ໄຂຕື່ມ.

4. ສຳລັບແຜນການລົງທຶນຂອງລັດປະຈຳປີ 2025 ແມ່ນເຫັນດີສະໜັບສະໜູນ ໂດຍສະເພາະແມ່ນການກຳນົດເປົ້າໝາຍຂອງການລົງທຶນໃນການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ, ການລົງທຶນເຂົ້າໃນການປັບປຸງເສັ້ນທາງທີ່ຕິດພັນກັບການນຳໃຊ້ລົດໄຟລາວ-ຈີນ, ປັບປຸງເສັ້ນທາງຕິດພັນກັບການທ່ອງທ່ຽວ; ສະນັ້ນ, ຢູ່ຈຸດນີ້ຢາກສະເໜີຕໍ່ລັດຖະບານຊ່ວຍຈັດສັນງົບປະມານເຂົ້າໃນການປັບປຸງເສັ້ນທາງໄປຫາສະຖານີລົດໄຟ, ເສັ້ນທາງໄປຕາດກວາງຊີເຊິ່ງຜ່ານມາແຂວງກໍໄດ້ມີຄວາມພະຍາຍາມປັບປຸງຈຳນວນໜຶ່ງແຕ່ກໍຍັງຕ້ອງການທຶນປັງປຸງຕື່ມເພາະເສັ້ນທາງດັ່ງກ່າວຮັບໃຊ້ການທ່ອງທ່ຽວ, ແຂກໄປຫຼາຍ ມັນເປັນໃບໜ້າໃບຕາຂອງປະເທດເຮົາ.

5. ເອົາໃຈໃສ່ຄຸ້ມຄອງການຂຸດຄົ້ນແຮ່ທາດຕ່າງໆ ໂດຍສະເພາະແມ່ນເຂັ້ມງວດໃນການຕິດຕາມກວດກາການອະນຸຍາດຂຸດຄົ້ນແຮ່ທາດຕ່າງໆ, ຖ້າອະນຸຍາດບໍ່ຖືກຕ້ອງ ກໍຕ້ອງເດັດຂາດປະຕິບັດວິໄນ; ນອກນັ້ນ, ກໍຕ້ອງຄຸ້ມຄອງການເຄື່ອນໄຫວຂຸດຄົ້ນຂອງບັນດາບໍລິສັດຕ່າງໆຕາມກົດໝາຍ.

(ສພຊ) - ກອງປະຊຸມສະໄໝສາມັນເທື່ອທີ8ຂອງສະພາແຫ່ງຊາດຊຸດທີ IX ເມື່ອວັນທີ 18 ພະຈິກຜ່ານມາ, **ທ່ານ ບຸນມີ ພົມມະສອນ ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 12 ແຂວງຄຳມ່ວນ** ໄດ້ປະກອບຄຳເຫັນຕໍ່ບົດລາຍງານຂອງທ່ານນາຍົກລັດຖະມົນຕີ ເຊິ່ງມີເນື້ອໃນບາງຕອນດັ່ງນີ້:

1. **ການຄຸ້ມຄອງ**ການລົງທຶນຂອງເອກະຊົນພາຍໃນ ແລະ ຕ່າງປະເທດ, ທ່ານນາຍົກ

ອ່ານຕໍ່ໜ້າ 7



## ບາງຄຳເຫັນ...

(ຕໍ່ຈາກໜ້າ 6)

ລັດຖະມົນຕີກໍໄດ້ເວົ້າແລ້ວກ່ຽວກັບມາດຕະການໃນການແກ້ໄຂ, ການສຳປະທານການເຊົ່າເນື້ອທີ່ດິນ ຖືວ່າເດັດຂາດຕົວຈິງ; ເຖິງແນວໃດກໍຕາມ, ການແກ້ໄຂຍັງຊັກຊ້າ, ຍັງມີຫຼາຍໂຄງການທີ່ຈອງໄວ້ຊື່ໆບໍ່ເຮັດຫຍັງ, ບາດຜູ້ມີທຶນ ຢາກມາລົງທຶນກໍມາບໍ່ໄດ້ ຍ້ອນວ່າໂຄງການມີເຈົ້າຂອງຈອງໄວ້ຢູ່ ໂດຍສະເພາະໂຄງການທີ່ຕິດພັນແຫຼ່ງວັດຖຸດິບ ໂດຍສະເພາະແຂວງຄຳມ່ວນ ກໍໄດ້ສະເໜີໃຫ້ບໍລິສັດ ຊີໂນ ເຮັດໂຮງງານປຸ໋ຍ ແຕ່ບໍ່ມີວັດຖຸ (ຖ່ານຫີນ) ສະໜອງໃຫ້ເຂົາເຈົ້າ, ແຕ່ວ່າມີຫຼາຍບໍລິສັດຖ່ານຫີນທີ່ມີບໍລິສັດອື່ນຈອງໄວ້ແລ້ວ ແຕ່ເຮົາບໍ່ສາມາດຈະໄປຈັດຕັ້ງປະຕິບັດໄດ້, ບັນຫານີ້ສະເໜີໃຫ້ກະຊວງ, ຂະແໜງການທີ່ກ່ຽວຂ້ອງກວດກາຄືນ ບໍ່ວ່າຈະເປັນເລື່ອງຖ່ານຫີນ ບັນຫາເນື້ອທີ່ກໍເຊັ່ນດຽວກັນ. ບັນຫາທີສອງ, ການໃຫ້ສຳປະທານ ຄິດວ່າມັນຫຼາຍໂພດ ຜູ້ໜຶ່ງ200-300ເຮັກຕາ, 1,000 ເຮັກຕາກໍມີ ແຕ່ເຮັດຕົວຈິງບາງທີບໍ່ຮອດ 100 ເຮັກຕາ.

**2. ການແກ້ໄຂຜົນກະທົບຕໍ່ສິ່ງແວດລ້ອມ-ສັງຄົມ:** ກອງປະຊຸມສະໄໝສາມັນເທື່ອທີ 7 ກໍໄດ້ເວົ້າແລ້ວ ຍັງມີຫຼາຍໂຄງການໄດ້ຮັບຜົນກະທົບຢູ່ ບໍ່ທັນໄດ້ຮັບການແກ້ໄຂ ໂດຍສະເພາະຢູ່ແຂວງຄຳມ່ວນ ກໍຄືຢູ່ເຂດນ້ຳປະແທ່ນ ເພິ່ນກໍວ່າຈະເຮັດໃຫ້ນ້ຳໃສ ແຕ່ມາຮອດປັດຈຸບັນຍັງຄືເກົ່າ ບໍ່ໄດ້ຮັບການແກ້ໄຂ, ກໍຢາກສະເໜີຕື່ມວ່າຈະມີມາດຕະການແນວໃດກ່ຽວກັບບັນຫາດັ່ງກ່າວ; ນອກນັ້ນ, ກໍຍັງມີໂຄງການອື່ນໆ ຍັງໄດ້ຮັບຜົນກະທົບ.

**3.ວຽກງານສຶກສາ:** ລູກຫຼານບໍ່ໄປຮຽນກໍຫຼາຍ, ປະລະກໍຫຼາຍ ຈະມີວິທີແກ້ໄຂບັນຫານີ້ແນວໃດ, ຈຶ່ງຢາກສະເໜີວ່າ: ຜ່ານການສຳມະນາວິທະຍາສາດຢູ່ວັງວຽງ ກໍໄດ້ຍົກຂຶ້ນວ່າ ຖ້າຢາກໃຫ້ນັກຮຽນໄປໂຮງຮຽນ ແລະ ຮຽນຈົນຈົບ ຕ້ອງມີການປະສານສົມທົບກັນລະຫວ່າງກະຊວງສຶກສາທິການ ແລະ ກິລາ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກະຊວງພາຍໃນເມື່ອຮຽນຈົບແລ້ວ ກໍຄວນມີວຽກເຮັດ ອາດຈະສົ່ງເສີມວິຊາຊີບໃດໜຶ່ງ ຫຼືວ່າເຈລະຈາກັບບໍລິສັດລົງທຶນພາຍໃນ ຫຼື ເອກະຊົນພາຍໃນ ແລະ ຕ່າງປະເທດ, ຮຽນຈົບໃຫ້ມີອາຊີບ ເຂົາເຈົ້າຈຶ່ງຈະຕັ້ງໃຈຮຽນ; ຖ້າມີແຕ່ຜະລິດອອກມາ ແລະ ບໍ່ໄດ້ເຮັດວຽກເຮັດງານຫຍັງ, ອັນນີ້ກໍໄດ້ຕັ້ງບັນຫາກັນຢູ່ ຄິດວ່າຖ້າມີແຜນຈັດສັນລະອຽດວ່າປີນີ້ຈະມີໂກຕາວິຊາຊີບດ້ານນີ້ເທົ່າໃດ, ການບໍລິການການທ່ອງທ່ຽວເທົ່າໃດ, ເລື່ອງອື່ນໆເທົ່າໃດ? ພວກເຮົາຍັງບໍ່ທັນມີແຜນລະອຽດເພື່ອປະສານສົມທົບກັບຜູ້ປະກອບການ. ອີກບັນຫາໜຶ່ງ ຢາກໃຫ້ເບິ່ງຜູ້ໃດທີ່ຮຽນດີຮຽນເກັ່ງໄດ້ໃບປະກາດແດງ ຫຼືວ່າຈົບປະລິນຍາໂທ, ປະລິນຍາເອກ ໂດຍສະເພາະຜູ້ຮຽນເກັ່ງ ຈົບມາແລ້ວ ກໍໃຫ້ບຸລິມະສິດປະກອບວິຊາອາຊີບໃຫ້ເຂົາ, ຖ້າບໍ່ມີວຽກເຮັດມັນກໍທໍ້ຖອຍໃຈ ໂດຍສະເພາະພໍ່-ແມ່ຜູ້ສົ່ງເສີມ.

**4. ການແບ່ງຂັ້ນຄຸ້ມຄອງ:** ສະເໜີບັນດາກະຊວງທີ່ກ່ຽວຂ້ອງໃຫ້ເບິ່ງຄືນຕື່ມ, ທິດ 3 ສ້າງ ກໍໄດ້ເວົ້າແຈ້ງກ່ຽວກັບການຫັນວຽກລົງສູ່ທ້ອງຖິ່ນຮາກຖານ ເຊິ່ງຍັງຫຼາຍອັນທີ່ກະຊວງຍັງບໍ່ທັນໄດ້ແບ່ງສິດໃຫ້ທ້ອງຖິ່ນຄຸ້ມຄອງ ໂດຍສະເພາະທາງຫຼວງແຫ່ງຊາດ; ສະເໜີວ່າ ທາງຫຼວງແຫ່ງຊາດທີ່ຜ່ານແຂວງໃດ ກໍຄວນມອບໃຫ້ແຂວງນັ້ນຄຸ້ມຄອງທຸກຢ່າງຈະໄດ້ບໍ່, ສ່ວນທຶນໃຫ້ກະຊວງຄຸ້ມຄອງກໍໄດ້ ແຕ່ວ່າສຳຄັນໃຫ້ທ້ອງຖິ່ນຊ່ວຍຕິດຕາມກວດກາວ່າມັນເປ່ເພແນວໃດ, ຈະແປງແນວໃດ? ບໍ່ໃຫ້ເປ່ເພໜັກແລ້ວຈຶ່ງໄປແປງ.



(ສພຊ) - **ທ່ານ ກິງແກ້ວ ມີວໍລະຈັກ ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ13ແຂວງສະຫວັນນະເຂດ** ໄດ້ປະກອບຄຳເຫັນຕໍ່ບົດລາຍງານຂອງທ່ານນາຍົກລັດຖະມົນຕີ ໃນວັນທີ 18 ພະຈິກ 2024 ວ່າ: ວຽກງານຈຸດສຸມທີ່ໄດ້ກຳນົດຢູ່ໃນແຜນພັດທະນາເສດຖະກິດສັງຄົມ ວຽກງານຈຸດສຸມທີໜຶ່ງຢູ່ໃນຂະແໜງກະສິກຳ ໃນນັ້ນໄດ້ມີແຜນສຸມໃສ່ຊຸກຍູ້ການຜະລິດເຂົ້າໃນ 10 ແຂວງເປົ້າໝາຍ ເຊິ່ງສະຫວັນນະເຂດ ກໍແມ່ນໜຶ່ງແຂວງທີ່ນອນໃນເປົ້າໝາຍຂອງໂຄງການຄໍ້າປະກັນສະບຽງອາຫານ, ສະເພາະປີ 2024 ທົ່ວແຂວງສາມາດຜະລິດເຂົ້າ ແລະ ເກັບກູ້ໄດ້ແລ້ວເຈັດແສນກວ່າໂຕນ ສະເລ່ຍໃສ່ພົນລະເມືອງແມ່ນຖືກຜູ້ໜຶ່ງ 6-7 ຮ້ອຍກິໂລຕໍ່ຄົນ ຖືວ່າກຸ້ມກິນ ແລະ ກໍສົ່ງຂາຍຈຳນວນຫຼາຍໝື່ນໂຕນ, ແຕ່ວ່າປີນີ້ ກໍເປັນປີທີ່ໂຊກດີນໍ້າບໍ່ຖ້ວມ ຖ້າຫາກວ່າປີໃດທີ່ນໍ້າຖ້ວມນັ້ນໃນສາມເມືອງເປົ້າໝາຍຂອງແຂວງ ເປັນຕົ້ນແມ່ນຈຳພອນ, ສອງຄອນ ແລະ ຊົນນະບູລີ ກໍຈະມີຄວາມຫຍຸ້ງຍາກ ຫຼືບາງປີກໍອາດຈະກວມໄປຮອດໄຊບູລີ ຈະເຮັດໃຫ້ຈຳນວນເຂົ້າເປືອກຫຼຸດລົງ; ເພື່ອຮອງຮັບໃຫ້ແກ່ການຜະລິດເຂົ້າໃຫ້ໄດ້ໃນແຕ່ລະປີ ແມ່ນມີຄວາມຈຳເປັນຈະຕ້ອງສຸມໃສ່ຈັດຕັ້ງປະຕິບັດໂຄງການຊົນລະປະທານຄືຢູ່ເມືອງຈຳພອນ ແລະ ເມືອງສອງຄອນ ທີ່ໄດ້ຈັດຕັ້ງປະຕິບັດໃນໄລຍະຜ່ານມາໃຫ້ສຳເລັດ ແລະ ກໍໃຫ້ສາມາດຜະລິດໃນສົກປີ 2025, ແຕ່ຜ່ານການຕິດຕາມກວດກາຕົວຈິງ ເຫັນວ່າມີບາງໂຄງການທີ່ຍັງມີລັກສະນະຊັກຊ້າ ເປັນຕົ້ນແມ່ນໂຄງການຊົນລະປະທານຢູ່ເມືອງສອງຄອນ ໃນເຂດລະຫານໍ້າຕາມທີ່ປະເມີນເບິ່ງແລ້ວຄາດວ່າຈະບໍ່ບັນລຸ, ປີກາຍນີ້ແກ້ໄຂໄດ້ແຕ່ 300 ເຮັກຕາ ກໍຍັງບໍ່ໄດ້ໝົດເນື້ອທີ່. ສະນັ້ນ, ຖ້າວ່າບໍ່ກະຕຸກແຕ່ຫົວທີ ຈະເຮັດໃຫ້ໂຄງການນີ້ລ່າຊ້າ ແລະ ກໍຈະບໍ່ທັນລະດູການຜະລິດນາແຊງ, ຈຶ່ງຢາກສະເໜີກະຊວງທີ່ກ່ຽວຂ້ອງລົງໄປຊຸກຍູ້ຕື່ມອີກ; ນອກຈາກນັ້ນ, ຍັງມີໂຄງການທີ່ໄດ້ເວົ້າແລ້ວໃນກອງປະຊຸມສະໄໝສາມັນເທື່ອທີ 7 ກະຊວງກ່ຽວຂ້ອງກໍຕົກລົງວ່າຈະຈັດຕັ້ງປະຕິບັດໂຄງການຫ້ວຍອາໄກ້ຫ້ວຍທ່າຣາວ ເຊິ່ງເປັນໂຄງການໃຫຍ່ຂອງແຂວງ ຖ້າວ່າຈັດຕັ້ງປະຕິບັດທັນໃນປີ 2025 ຈະເຮັດໃຫ້ໃບໜ້າຂອງແຂວງສະຫວັນນະເຂດດີຂຶ້ນ, ຈະເຮັດໃຫ້ ການຜະລິດເຂົ້ານາແຊງໄດ້ຫຼາຍຂຶ້ນຕື່ມ ແລະ ຖ້າຫາກມີເງື່ອນໄຂ ສະເໜີໃຫ້ກະຊວງກະສິກຳ ແລະ ປ່າໄມ້ ລົງໄປຊຸກຍູ້ຕື່ມ ໂດຍສະເພາະແມ່ນໂຄງການຊົນລະປະທານຫ້ວຍພາແລງຢູ່ເມືອງຈຳພອນ ເຊິ່ງປະລະມາຫຼາຍປີແລ້ວ ບໍ່ມີຄວາມຄືບໜ້າ, ຈະເຮັດແນວໃດກໍບໍ່ເຮັດ ສະເໜີໃຫ້ພາກສ່ວນກ່ຽວຂ້ອງລົງໄປເບິ່ງນຳຕື່ມ ຖ້າວ່າຈະໂຈະ ຈະຍົກເລີກ ກໍໃຫ້ແຈ້ງລະອຽດ ປະຊາຊົນເຂົາເຈົ້າກໍຢາກໄດ້ດິນເຂົາເຈົ້າຄືນເພື່ອທຳການຜະລິດ, ຖ້າຍັງຈະສືບຕໍ່ ເຂົາເຈົ້າກໍຄອງຄອຍ.

ອັນທີສອງ: ຢູ່ໃນຄາດໝາຍຂອງຂະແໜງອຸດສາຫະກຳການຜະລິດແຮ່ທາດ ໄດ້ກຳນົດຈະເພີ່ມຂຶ້ນ 28.20% ຈາກປີ 2024 ແຕ່ຜ່ານການຕິດຕາມກວດກາຕົວຈິງຂອງ ສສຊ ປະຈຳເຂດເລືອກຕັ້ງທີ 13 ກໍຍັງເຫັນວ່າມີບາງໂຄງການ ການອະນຸຍາດໃຫ້ບໍລິສັດເຂົ້າໄປຂຸດຄົ້ນເຂົ້າໄປສຳປະທານແຮ່ທາດ ຍັງບໍ່ທັນຮັດກຸມ, ລວມທັງນິຕິກຳບາງຄັ້ງເປັນຄຳເຫັນຂອງຮອງຫົວໜ້າກົມ ແຈ້ງລົງໄປຫາພະແນກ ພະແນກກໍແຈ້ງຫາເມືອງ ເມືອງກໍແຈ້ງຫາບໍລິສັດຫາບ້ານຫາກຸ່ມໃຫ້ຄວາມຮ່ວມມືແກ່ບໍລິສັດນັ້ນໂລດ; ສະນັ້ນ, ສະເໜີໃຫ້ທາງພາກສ່ວນກ່ຽວຂ້ອງ ເຮັດໃຫ້ມັນຮັດກຸມຄັກແນ່, ໂຄງການໃດທີ່ສະເໜີຢູ່ຂັ້ນສູນກາງຂໍໃຫ້ທາງສູນກາງສົມທົບກັບແຂວງສາກ່ອນ ເພາະຢູ່ແຂວງກໍມີຄະນະກຳມະການຄຸ້ມຄອງການລົງທຶນຂັ້ນແຂວງ, ບາງບ່ອນທີ່ເຂົາເຈົ້າສະເໜີຂຸດຄົ້ນຂໍສຳປະທານນັ້ນ ມັນຕິດພັນກັບດິນປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ເຫັນວ່າກໍລະນີນີ້ມີຄວາມຫຍຸ້ງຍາກຫຼາຍ, ບາງບໍລິສັດທີ່ໄດ້ຮັບອະນຸຍາດໃນປີ 2023-2024 ຖ້າວ່າຈະເພີ່ມຂຶ້ນອີກ 28% ຄິດວ່າໃນປີ2025 ຈະເພີ່ມຫຼາຍຂຶ້ນ ທັງໆມີຄຳສັ່ງໃຫ້ຢຸດໃຫ້ໂຈະແລ້ວ. ໃນຈຸດນີ້ບໍ່ທັນເຂົ້າໃຈວ່າເພິ່ນຄົ້ນຄວ້າກັນຄືແນວໃດ ຈຶ່ງຈະເພີ່ມຂຶ້ນອີກ 28% ຫຼືວ່າສະເພາະແຕ່ໂຄງການບໍ່ແຮ່ອັນໃດອັນໜຶ່ງເທົ່ານັ້ນບໍ່? ສະນັ້ນ, ຄວນກຳນົດວ່າໂຕໃດຢຸດຖາວອນໂຕໃດໃຫ້ຢຸດຕິໄປເລີຍ ຂໍໃຫ້ເປັນອັນລະອຽດແດ່.

ຈຸດທີສາມ: ຕໍ່ແຜນການລົງທຶນຂອງລັດປະຈຳປີ 2025 ສະເໜີໃຫ້ທາງລັດຖະບານຄົ້ນຄວ້າຕື່ມການຈັດສັນງົບປະມານການລົງທຶນຂອງລັດ, ຜ່ານມາແມ່ນແບ່ງໃຫ້ແຕ່ລະກະຊວງກະແຈກກະຈາຍແຫຼ່ງທຶນເກືອບວ່າທຸກກະຊວງ, ບາງກະຊວງແບ່ງໃຫ້ແຂວງ ບາງວຽກກໍໄດ້ຫຼາຍບາງວຽກກໍໄດ້ໜ້ອຍ ບາງວຽກມີຄວາມຈຳເປັນທີ່ຈະຕ້ອງພັດທະນາຊໍ້າພັດໄດ້ໜ້ອຍ ເຮັດໃຫ້ທາງແຂວງເຮົາຈັດສັນໄດ້ຍາກ, ສະເໜີໃຫ້ລັດຖະບານເອົາງົບຈຳນວນດັ່ງກ່າວ ມອບໃຫ້ແຂວງຈັດສັນໂລດໄດ້ບໍ່ ມັນຈຶ່ງຈະຕິດຕາມກວດກາກັນງ່າຍ; ສຳລັບໂຄງການສູນກາງຄຸ້ມຄອງ ເຫັນວ່າມີຫຼາຍໂຄງການບໍ່ໄດ້ຈັດຕັ້ງປະຕິບັດ ຕົວຢ່າງເສັ້ນທາງໜຶ່ງຈີ (1G) ກໍບໍ່ຮູ້ວ່າອະນາຄົດຈະເປັນຈັ່ງໃດ ເພາະມີດງຽບໄປດົນແລ້ວ, ຂົວຕາດໄຮ ທາງເລກ 10 ກໍບໍ່ມີຄວາມຄືບໜ້າ. ສະນັ້ນ, ໂຄງການທີ່ສູນກາງຄຸ້ມຄອງອວ່າຍໄປໃຫ້ແຂວງຄຸ້ມຄອງໄດ້ບໍ່ລວມທັງງົບປະມານ ໃຫ້ແຂວງຈັດຕັ້ງປະຕິບັດເລຍ ເພາະວ່າ 34 ຂົວນັບແຕ່ທາງເລກ 10 ໄປຫາເມືອງວິລະບູລີບາງທີແຂວງກໍອາດຈະມີຄວາມສາມາດທີ່ຈະນຳເອົາເງິນເກີນແຜນ ປະກອບສ່ວນເຮັດໃຫ້ປະຊາຊົນໄດ້ນຳໃຊ້ທຽວໄປມາ, ເຂົາເຈົ້າກໍຈະຍ້ອງວ່າເຮົາມີການພັດທະນາ, ອັນນີ້ປະໄປເລີຍບໍ່ຮູ້ວ່າເມື່ອໃດຈະເຮັດສຳເລັດ.

ປີນີ້ໄດ້ຕັດສິນໃຈສຸມໃສ່ຂົວເຊປອງເອັສໄອເອັມ ກໍຖືວ່າກາຍເຄິ່ງແລ້ວ ຄາດວ່າປີ 2025 ຈະສາມາດນຳໃຊ້ໄດ້, ປະຊາຊົນກໍຍ້ອງຍໍຊົມເຊີຍ ແລະ ພິເສດພວກເຮົາໃຊ້ເງິນເກີນແຜນໄປສ້າງຂົວຂ້າມເຊຈຳພອນຢູ່ເມືອງອາດສະພອນ ຢູ່ນັ້ນມີ 2 ກຸ່ມບ້ານ ລວມ 20 ກວ່າບ້ານ ເຂົາເຈົ້າດີໃຈທີ່ໄດ້ນຳໃຊ້ຂົວທຽວທາງແລະບໍ່ມີຄວາມສ່ຽງຕໍ່ການຂີ່ເຮືອນ້ອຍຂ້າມເຊຈຳພອນ. ສະເໜີໃຫ້ກະຊວງກ່ຽວຂ້ອງຄົ້ນຄວ້າຕື່ມສຳລັບເມືອງນອງ ກໍຢູ່ໃນບັນຊີເມືອງທຸກຍາກ, ຖ້າຫາກຈະຈັດສັນຄືປີຜ່ານມາກໍຄືຈະຍາກ; ສະນັ້ນ, ສະເໜີໃຫ້ທາງລັດຖະບານແບ່ງເປັນທຶນສະເພາະໄປພັດທະນາໃນເມືອງນັ້ນເລີຍຈະເປັນການດີ, ດີກວ່າຈະໄປຈັດສັນກະແຈກກະຈາຍ ເຮັດໃຫ້ການພັດທະນາຊ້າ.

ບັນຫາສຸດທ້າຍ ແມ່ນການສະເໜີຂໍດັດແກ້ແຜນງົບປະມານແຫ່ງລັດປີ 2024 ສຸດທີ່ເຫັນດີ ແຕ່ວ່າໃນນີ້ສະເໜີໃຫ້ມີນິຕິກຳແນະນຳລະອຽດ ເພາະປີຜ່ານມາສັງເກດເຫັນວ່າການໃຊ້ເງິນເກີນແຜນ ຫຼືວ່າເງິນບາງຮ່ອງມັນບໍ່ໄປຕາມທິດ, ມີບາງອັນມີຄວາມຈຳເປັນຮີບດ່ວນທີ່ຢາກຈັດຕັ້ງປະຕິບັດກ່ອນ ຖ້າເຮັດກ່ອນຄືແນວນັ້ນ ມູນຄ່າມັນກໍຈະສູງແຕ່ເງິນເກີນແຜນກໍບໍ່ຫຼາຍ ອັນນີ້ຈະເປັນການສ້າງໜີ້ສິນໄວ້, ຝາກໃຫ້ລັດຖະບານໄດ້ຄົ້ນຄວ້າຕື່ມ.







# ບັນຫາປື້ນອ້ອມສື່

# ດົ້ນກົບເມກ

ເມື່ອອາທິດຜ່ານມາ ຜູ້ຂຽນໄດ້ມີໂອກາດຕິດຕາມທ່ານ ຄຳວິສັນ ແກ້ວສຸວັນ ຊ່ຽວຊານທີ່ປຶກສາວຽກງານສື່ມວນຊົນສະພາແຫ່ງຊາດ ໄປບັນຍາຍເລື່ອງສື່ສັງຄົມອອນລາຍ ແລະ ການຕອບໂຕ້ແກ້ຂໍ້ຂ້ອງໃຈທີ່ເກີດຂຶ້ນໃນວົງການສື່ສານ ທີ່ຕ້ອງໃຊ້ຂໍ້ມູນຈະແຈ້ງຊັດເຈນ ເພື່ອໃຫ້ສັງຄົມຜູ້ບໍລິໂພກເສບສື່ ໄດ້ເຂົ້າໃຈວ່າ: ອັນໃດເປັນຂ່າວໃສ່ຮ້າຍປ້າຍສີ ແລະ ອັນໃດຄວນຕອບໂຕ້ຢ່າງມີເຫດຜົນ ແລະ ເອກະສານຫຼັກຖານອ້າງອີງ ເຊິ່ງກໍເທົ່າກັບເວລານັກມວຍຊົກກັນ ຕ້ອງມີຫຼູ່ຽມມວຍ ແລະ ຊັ້ນເຊີງ ສຳຄັນກໍແມ່ນບັນນາທິການຕ້ອງເອົາໃຈໃສ່; ດັ່ງນັ້ນ, ຜູ້ເປັນບັນນາທິການຈຶ່ງບໍ່ຄວນຖືເບົານໍ !.

ປະເດັນຫົວຂໍ້ບັນຍາຍການຂຽນຂ່າວແບບມືອາຊີບ ແລະ ກຳແໜ້ນວິທີອະທິບາຍຕອບໂຕ້ການບິດເບືອນຂ່າວໃນສື່ອອນລາຍ ທີ່ທາງຄະນະໂຄສະນາອົບຮົມສູນ ກາງພັກຈັດຂຶ້ນ ເຊິ່ງການບັນຍາຍເຮັດແບບ Video Conference ທົ່ວປະເທດ ໃຫ້ແກ່ຄະນະໂຄສະນາອົບຮົມ 17 ແຂວງ ລວມທັງນະຄອນຫຼວງ, ທ່ານ ຄຳວິສັນ ແກ້ວສຸວັນ ມີຄຳເຫັນວ່າ: ການຝຶກອົບຮົມສື່ໃຫ້ແກ່ຜູ້ມີອຳນາດໜ້າທີ່ໂດຍກົງ ມັນກໍແມ່ນເປັນການຕິດອາວຸດທາງປັນຍາ (ປະກອບເຄື່ອງມື) ໃຫ້ແກ່ຜູ້ກ່ຽວ ເພື່ອຕິຖອຍຂ່າວບິດເບືອນບໍ່ມີມູນຄວາມຈິງ ເປັນການຕອບໂຕ້ຊີ້ແຈງເລື່ອງຈິງໃຫ້ແກ່ສັງຄົມໄດ້ຮັບຮູ້ອັນໃດຖືກ ຫຼື ຜິດ.

ທ່ານຄຳວິສັນແກ້ວສຸວັນ ໄດ້ເນັ້ນຫຼາຍປະເດັນຕໍ່ຜູ້ເຂົ້າຮ່ວມຝຶກອົບຮົມ ສຳຄັນແມ່ນການເກັບກຳຂໍ້ມູນ, ສຶກສາບັນຫາຢ່າງລະອຽດ; ຂໍ້ມູນຈາກສື່ຫຼາຍບ່ອນບໍ່ຊັດເຈນ; ຊອກຂໍ້ມູນຈາກແຫຼ່ງຂ່າວໃຫ້ຮູ້ແຈ້ງ; ຄົ້ນຄວ້ານະໂຍບາຍພັກ-ລັດ ກໍຄືລະບຽບກົດໝາຍໃຫ້ຮູ້ເຂົ້າໃຈເລິກເຊິ່ງ. ປະເດັນຕໍ່ມາ ແມ່ນຜູ້ຂຽນຂ່າວກໍຕ້ອງໄດ້ຮູ້ພາສາ-ໄວຍາກອນ; ສຸພາສິດ, ສຳນວນລາວ ເພື່ອນຳໃຊ້ປະກອບຂຽນເນື້ອໃນໃຫ້ຄົມໃນສັງຄົມສົນໃຈອ່ານ.

ປັນຫາປື່ນອ້ອມສື່ຍັງກ່ຽວຂ້ອງກັບເລື່ອງຜູ້ມີໜ້າທີ່ຮັບຜິດຊອບໂດຍກົງ ຈະລົງມືຂຽນຕ້ອງດຸໝັ່ນຊອກຂໍ້ມູນ, ຊອກບົດຮຽນ ແລະ ປຶກສາບັນນາທິການ ໃຫ້ຊີ້ນຳ-ກວດແກ້ຈິງຈັງ ບໍ່ເຮັດແບບມັກງ່າຍ ເພາະຈະພາໃຫ້ຂຽນບໍ່ເກັ່ງ ຖ້າບໍ່ຝຶກຝົນ, ອົບຮົມກໍຈະບໍ່ກ້າຂຽນໜ້າເຫັນໃຈບັນນາທິການນໍ !.





## ການຈັດຕັ້ງ...

(ຕໍ່ຈາກໜ້າ 1)

ຕິສະພາແຫ່ງຊາດ ສະບັບເລກທີ 110/ສພຊ, ລົງວັນທີ 21 ພະຈິກ 2023 ເຊິ່ງມີບາງຕອນໃຫ້ຮູ້ວ່າ: ນັບແຕ່ເດືອນ 01-11 ປີ 2024 ໃນຂອບເຂດທົ່ວປະເທດ ສາມາດແກ້ໄຂມ້າງລາຍຄະດີຢາເສບຕິດໄດ້ທັງໝົດ 3,395 ເລື່ອງ, ຈັບຜູ້ຖືກຫາໄດ້ 5,168 ຄົນ/ຍິງ 505 ຄົນ, ຕ່າງປະເທດ 199 ຄົນ/ຍິງ 19 ຄົນ; ຢຶດເຮໂຣອິນ ໄດ້ 380.96 ກິໂລ, ຢາບ້າ 81,030,733 ເມັດ ນ້ຳໜັກ 8,103.07 ກິໂລ, ຢາໄອສ໌ 4,816.17 ກິໂລ, ຢາຝິ່ນ 84.86 ກິໂລ, ກັນຊາ 3,583.24 ກິໂລ, ເຄຕາມີນ 33.14 ກິໂລ, ຢາອີ 2,584 ເມັດ ກັບ 61.44 ກິໂລ, ໂຄເຄນ 0.99 ກິໂລ, ແປ້ງຝຸ່ນ 10,092.84 ກິໂລ, ນ້ຳຢາສານເຄມີ 101 ຖັງ, ລົດໃຫຍ່ 77 ຄັນ, ລົດຈັກ 480 ຄັນ, ປືນ 10 ກະບອກ, ລູກປືນ 1,677 ລູກ. ຈາກນັ້ນ, ທ່ານ ພົທ. ສຸວອນ ເລືອງບຸນມີ ຮອງປະທານສະພາແຫ່ງຊາດ ຕາງໜ້າຄະນະປະຈຳສະພາແຫ່ງຊາດໄດ້ປະກອບຄຳເຫັນຕໍ່ບົດລາຍງານຂອງລັດຖະບານກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ.

ທ່ານປະທານກອງປະຊຸມ ໄດ້ເຈາະຈີ້ມ ແລະ ໃຫ້ທິດຊີ້ນຳແກ່ບັນດາທ່ານສະມາຊິກສະພາແຫ່ງຊາດ (ສສຊ) ໃນການຄົ້ນຄວ້າປະກອບຄຳເຫັນຢ່າງມີຈຸດສຸມຕໍ່ບົດລາຍງານດັ່ງກ່າວພ້ອມທັງສະເໜີບັນດາທ່ານ ສສຊ ມີຄຳຊັກຖາມເພີ່ມຕື່ມຕໍ່ບັນຫາທີ່ຍັງມີຄວາມສົນໃຈ; ຈາກນັ້ນ, ທ່ານ ພົອ. ວິໄລ ຫຼ້າຄຳຟອງ ກໍໄດ້ຊີ້ແຈງກັບທີ່ ເພື່ອໃຫ້ຄວາມກະຈ່າງແຈ້ງຕໍ່ບັນດາຄຳຊັກຖາມ.

**(ນາງ ອາລິນ ສຸພົມມະປະກິດ)**



## ຮອງປະທານ...

(ຕໍ່ຈາກໜ້າ 1)

(ສພຊ)-ຕອນເຊົ້າຂອງວັນທີ 22 ພະຈິກ 2024 ທີ່ສະພາແຫ່ງຊາດ, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ໄດ້ຕ້ອນຮັບການຢ້ຽມຂ່ຳນັບຂອງຄະນະຜູ້ແທນສະພາແຫ່ງຊາດ ແຫ່ງ ສ.ເກົາຫຼີນຳໂດຍທ່ານປາກດັກ ຮຶມ (Park Duk Hyum) ສະມາຊິກສະພາແຫ່ງຊາດ ແຫ່ງ ສ.ເກົາຫຼີ ພ້ອມດ້ວຍຄະນະ ໃນໂອກາດເດີນທາງມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປ ລາວ.

ໃນການພົບປະຄັ້ງນີ້, ທ່ານຮອງປະທານສະພາແຫ່ງຊາດ ໄດ້ສະແດງຄວາມປິຕິຍິນດີທີ່ໄດ້ມີໂອກາດຕ້ອນຮັບຄະນະຜູ້ແທນສະພາແຫ່ງຊາດ ແຫ່ງ ສ.ເກົາຫຼີ ພ້ອມທັງຕີລາຄາສູງຕໍ່ການມາຢ້ຽມຢາມໃນຄັ້ງນີ້ ເຊິ່ງເປັນການປະກອບສ່ວນສຳຄັນເຂົ້າໃນການເສີມຂະຫຍາຍການພົວພັນຮ່ວມມືລະຫວ່າງ 2 ປະເທດ ກໍຄືລະຫວ່າງ 2 ອົງການນິຕິບັນຍັດຂອງສອງປະເທດ.

ທ່ານຮອງປະທານສະພາແຫ່ງຊາດ ໄດ້ແຈ້ງສະພາບການພົ້ນເດັ່ນຂອງ ສປປລາວ ໃຫ້ແກ່ຄະນະຜູ້ແທນຊາບແລະຕີລາຄາການພົວພັນຮ່ວມມືລະຫວ່າງ 2 ປະເທດທີ່ມີມາຕະຫຼອດໄລຍະ 30 ປີ ພາຍ ຫຼັງທີ່ມີການສ້າງຕັ້ງສາຍພົວພັນການທູດນຳກັນແຕ່ປີ 1995 ເປັນຕົ້ນມາ ເຊິ່ງສະແດງອອກໃນການພົວພັນດ້ານຕ່າງໆເຊັ່ນ: ດ້ານການເມືອງ ໄດ້ມີການແລກປ່ຽນຄະນະຜູ້ແທນຂັ້ນສູງນຳກັນ, ດ້ານເສດຖະກິດ-ການຄ້າ ການລົງທຶນ ມີຄວາມຄືບໜ້າຫຼາຍ ເຊິ່ງ ສ.ເກົາຫຼີ ເປັນປະເທດທີ່ມີການລົງທຶນຫຼາຍຢູ່ ສປປລາວ ໃນມູນຄ່າຫຼາຍຮ້ອຍລ້ານໂດລາສະຫະລັດ, ຈັດເປັນປະເທດອັນດັບ 4 ໃນຈຳນວນ 53 ປະເທດທີ່ມີການລົງທຶນຢູ່ລາວ, ນອກນັ້ນ ຍັງໄດ້ມີການຊ່ວຍເຫຼືອສະໜັບສະໜູນ ສປປ ລາວໃນຫຼາຍດ້ານ: ບົດຮຽນໃນການພັດທະນາຊົນນະບົດ, ການສ້າງພື້ນຖານໂຄງລ່າງ, ການພັດທະນາຊັບພະຍາກອນມະນຸດ, ການຊ່ວຍໃນໂຄງການເກັບກູ້ລະເບີດທີ່ບໍ່ທັນແຕກ, ການທ່ອງທ່ຽວ ແລະ ຂົງເຂດອື່ນໆທີ່ເປັນທ່າແຮງຂອງສອງຝ່າຍ.

ທ່ານ ປາກ ດັກ ຮຶມ ໄດ້ສະແດງຄວາມດີໃຈທີ່ໄດ້ມີໂອກາດມາຢ້ຽມຢາມລາວເປັນຄັ້ງທຳອິດ ແລະ ຕີລາຄາສູງຕໍ່ການຕ້ອນຮັບຂອງທ່ານຮອງປະທານສະພາແຫ່ງຊາດລາວ ແລະ ມີຄວາມປິຕິຍິນດີຕໍ່ການພົວພັນຮ່ວມມືລະຫວ່າງ 2 ປະເທດ ແລະຈະສືບຕໍ່ມີການຮ່ວມມືກັບຝ່າຍລາວທາງດ້ານນິຕິບັນຍັດໃນຕໍ່ໜ້າ.

ທ່ານຮອງປະທານສະພາແຫ່ງຊາດ ໄດ້ສະແດງຄວາມເຊື່ອໝັ້ນວ່າໃນໂອກາດສະເຫຼີມສະຫຼອງ ຄົບຮອບ 30 ປີ ວັນສ້າງຕັ້ງສາຍພົວພັນການທູດໃນປີ 2025 ນີ້, ສອງຝ່າຍຈະມີບັນດາກິດຈະກຳສຳຄັນຫຼາຍກິດຈະກຳຮ່ວມກັນ.

**(ນາງ ອາລິນ ສຸພົມມະປະກິດ)**




# ວິທີເຮັດວຽກ

### ພາກທີ 7
### ບັນຫາພະນັກງານ

**1. ການອົບພະຍົບພະນັກງານ**

ພະນັກງານແມ່ນຄົນຜູ້ນຳເອົານະໂຍບາຍຂອງພັກ ຂອງລັດຖະບານໄປຊີ້ແຈງໃຫ້ປະຊາຊົນເຂົ້າໃຈແຈ້ງ ແລະ ປະຕິບັດຕາມ ພ້ອມກັນນັ້ນ ກໍນຳເອົາສະພາບການຂອງປະຊາຊົນຂຶ້ນມາລາຍງານຕໍ່ພັກ ແລະ ຕໍ່ລັດຖະບານໃຫ້ເຂົ້າໃຈແຈ້ງ, ເພື່ອໃຫ້ວາງນະໂຍບາຍຖືກກັບສະພາບຕົວຈິງ.

ເພາະສະນັ້ນ, ພະນັກງານຈຶ່ງແມ່ນກົກເຄົ້າຂອງທຸກວຽກງານ. ດັ່ງນັ້ນ, ການອົບຮົມພະນັກງານຈຶ່ງແມ່ນວຽກງານກົກເຄົ້າຂອງພັກເຮົາ. ພັກເຮົາກໍໄດ້ເປີດການອົບຮົມພະນັກງານຫຼາຍເທື່ອມາແລ້ວ. ແຕ່ວ່າພະນັກງານສ່ວນຫຼາຍຍ້ອນວ່າຕິດທຸລະຫຼາຍ ຫຼື ວ່າໄກສູນກາງໂພດ ຈຶ່ງບໍ່ທັນໄດ້ຮັບການອົບຮົມ. ກ່ຽວກັບພະນັກງານເຫຼົ່ານັ້ນ ພັກຕ້ອງຊອກຫາຊ່ອງທາງອົບຮົມເຂົາເຈົ້າ (ບາງທີກໍເປີດການອົບຮົມຢູ່ຕາມທ້ອງຖິ່ນ, ບາງທີກໍສົ່ງປື້ມຮຽນໃຫ້ເຂົາເຈົ້າອ່ານເພື່ອຮຽນຢູ່ກັບບ່ອນ). ຂໍ້ບົກພ່ອງຢູ່ໃນການອົບຮົມມີດັ່ງນີ້: ບາງບ່ອນໄດ້ເປີດການອົບຮົມນັ້ນແມ່ນເປັນການດີ. ແຕ່ວ່າການອົບຮົມເຫຼົ່ານັ້ນຍັງມີຂໍ້ບົກພ່ອງຫຼາຍ. ຍົກຕົວຢ່າງກໍຄື: ເມື່ອອົບຮົມພະນັກງານຝ່າຍບໍລິຫານ ຊ້ຳພັດບໍ່ເວົ້າເຖິງວຽກການບໍລິຫານ. ການສອນການເມືອງນັ້ນ ສອນກວ້າງຂວາງຫຼາຍ ບໍ່ຖືກກັບຄວາມຈິງ ຮຽນແລ້ວເອົາໄປໃຊ້ບໍ່ໄດ້.

ອ່ານຕໍ່ສະບັບໜ້າ...

## ທິວໜ້າ...

(ຕໍ່ຈາກໜ້າ 1)

ງານງົບປະມານ ແລະ ການເງິນ ເຊິ່ງເປັນການປະກອບສ່ວນຮັດແໜ້ນແລະເສີມຂະຫຍາຍສາຍພົວພັນມິດຕະພາບອັນເປັນມູນເຊື້ອ ແລະ ຄູ່ຮ່ວມຍຸດທະສາດຮອບດ້ານ ໝັ້ນຄົງ ຍາວນານ ຕາມທິດ 4 ດີ ລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ແລະ ການເປັນຄູ່ຮ່ວມຊາຕາກຳສັງຄົມນິຍົມ ລາວ-ຈີນ, ຈີນ-ລາວ ໃຫ້ນັບມື້ເປັນຮູບປະທຳ ແລະ ແຕກດອກອອກຜົນຍິ່ງໆຂຶ້ນ.

ສະຫາຍ ຊຸ ຮົງຊາຍ ກໍໄດ້ສະແດງຄວາມຂອບໃຈຕໍ່ການຕ້ອນຮັບຢ່າງອົບອຸ່ນ ພ້ອມທັງລາຍງານຜົນການພົບປະເຮັດວຽກ ແລະແລກປ່ຽນບົດຮຽນກັບກຳມາທິການແຜນການ, ການເງິນ ແລະ ການກວດສອບ; ແຈ້ງສະພາບການທີ່ພົ້ນເດັ່ນໂດຍຫຍໍ້ຂອງ ສປຈີນ ແລະ ການປະຕິບັດພາລະບົດບາດຂອງກຳມາທິການວຽກງານງົບປະມານ ກໍຄືສະພາຜູ້ແທນປະຊາຊົນທົ່ວປະເທດຈີນໃຫ້ຮັບຊາບ.

**(ນາງ ອາລິນ ສຸພົມມະປະຖົດ)**

## ປັບປຸງ...

(ຕໍ່ຈາກໜ້າ 1)

ຖະທຳມະນູນ ຖືກຕ້ອງຕາມທິດຊີ້ນຳຂອງສູນກາງພັກ, ມີຄວາມຄົບຖ້ວນ, ສອດຄ່ອງ, ຮັດກຸມ ແລະ ມີຄວາມເປັນເອກະພາບສູງພາຍໃນ ຄລຊ ທັງເປັນບ່ອນອີງນຳເອົາຮ່າງປັບປຸງເບື້ອງຕົ້ນສະເໜີຕໍ່ກອງປະຊຸມສະໄໝສາມັນເທື່ອທີ 8 ຂອງ ສພຊ ຊຸດທີ XI ປະກອບຄວາມຄິດເຫັນກ່ອນຈະນຳໄປທາບທາມຕາມຂັ້ນຕອນກຳນົດໄວ້.

ຜູ້ເຂົ້າຮ່ວມໄດ້ພ້ອມກັນຍົກສູງຄວາມຮັບຜິດຊອບໃນການຄົ້ນຄວ້າ, ປຶກສາຫາລືແລະປະກອບຄວາມເຫັນຢ່າງເລິກເຊິ່ງຕໍ່ເນື້ອໃນຈິດໃຈຊີ້ນຳຂອງກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ຄັ້ງທີ 9 ສະໄໝທີ XI ຕໍ່ການປັບປຸງລັດຖະທຳມະນູນສະບັບປີ 2015; ກວດກາຄືນການປັບປຸງ ແລະ ການເພີ່ມໃໝ່ຂອງບັນດາມາດຕາຕ່າງໆລວມທັງການໂຮມມາດຕາ ແລະ ຍຸບບາງມາດຕາ ຂອງລັດຖະທຳມະນູນ ຖືກຕ້ອງ, ສອດຄ່ອງແລ້ວບໍ່? ໃນນີ້ ມີບາງມາດຕາທີ່ກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ບໍ່ໄດ້ພິຈາລະນາປັບປຸງ, ແຕ່ຄວນປັບປຸງຫຼືບໍ່? ສຳລັບບັນຫາການສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງໃນໄລຍະໃໝ່ ໄດ້ບັນຍັດເປັນເນື້ອໃນຢູ່ມາດຕາ 13 ສອດຄ່ອງຫຼືບໍ່; ບົດລາຍງານຄວາມຄືບໜ້າການປັບປຸງລັດຖະທຳມະນູນຕໍ່ກອງປະຊຸມສະໄໝສາມັນເທື່ອທີ 8 ແລະ ຄຳຖາມເຈາະຈີ້ມເພື່ອໃຫ້ກອງປະຊຸມສະພາແຫ່ງຊາດປະກອບຄວາມເຫັນ.

**(ນາງ ອາລິນ ສຸພົມມະປະຖົດ)**

## ປະທານ...

(ຕໍ່ຈາກໜ້າ 5)

ແລະ ຖອດຖອນບົດຮຽນເຊິ່ງກັນແລະກັນ; ເຂົ້າຮ່ວມເຄື່ອນໄຫວ ແລະ ປະຕິບັດພັນທະຂອງສະພາແຫ່ງຊາດລາວ ຕໍ່ບັນດາອົງການຈັດຕັ້ງພາກພື້ນ ແລະ ສາກົນ ທີ່ສະພາແຫ່ງຊາດລາວເປັນພາຄີ ເປັນຕົ້ນແມ່ນ IPU, ASEP, APF, APPF ແລະ ອື່ນໆ ເຊິ່ງຈະເປັນການເພີ່ມທະວີການຕິດຕາມກວດກາ ແລະ ຊຸກຍູ້ການປະຕິບັດສັນຍາ ແລະ ສົນທິສັນຍາທີ່ ສປປລາວ ເປັນພາຄີ; ສືບຕໍ່ແລກປ່ຽນສານອວຍພອນ, ສານຊົມເຊີຍ, ສານຕອບຂອບໃຈ, ສານເສົ້າສະຫຼົດໃຈ ແລະ ອື່ນໆ ກັບບັນດາລັດຖະສະພາຕ່າງປະເທດ; ຕ້ອນຮັບການເຂົ້າພົບປະເຮັດວຽກ ແລະ ຢ້ຽມຂ່ຳນັບຂອງບັນດາທູຕານຸທູດ, ຜູ້ຕາງໜ້າອົງການຈັດຕັ້ງສາກົນປະຈຳລາວ ແລະ ແຂກຕ່າງປະເທດທີ່ມາຢ້ຽມຢາມ ສປປລາວ.

ທ່ານປະທານ ກຕທ ຍັງໄດ້ສະເໜີໃຫ້ບັນດາທ່ານເອກອັກຄະລັດຖະທູດ ສືບຕໍ່ຊຸກຍູ້ ແລະ ສົ່ງເສີມການພົວພັນຮ່ວມມືດ້ານເສດຖະກິດ, ການຄ້າແລະການລົງທຶນ ລະຫວ່າງ ສປປລາວ ກັບຕ່າງປະເທດ ໃຫ້ມີການຂະຫຍາຍຕົວຂຶ້ນກວ່າເກົ່າ; ຊ່ວຍຊຸກຍູ້ການພົວພັນຮ່ວມມືລະຫວ່າງອົງການນິຕິບັນຍັດໃຫ້ເປັນປົກກະຕິ ແລະ ຕໍ່ເນື່ອງ ໂດຍໃຫ້ມີການແລກປ່ຽນຂອງຄະນະຜູ້ແທນນຳກັນໃນລະດັບຕ່າງໆຢ່າງປົກກະຕິ; ຊຸກຍູ້ໃຫ້ມີການຮ່ວມມືທາງດ້ານວິຊາການ ໂດຍຮູບການຈັດສຳມະນາ, ເຝິກອົບຮົມ, ທັດສະນະສຶກສາແລະແລກປ່ຽນບົດຮຽນ ເພື່ອຍົກສູງຂີດຄວາມສາມາດແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງຂອງ ສປປລາວ; ສືບຕໍ່ສະໜັບສະໜູນການພົວພັນຮ່ວມມືນຳກັນໃນເວທີລັດຖະສະພາພາກພື້ນ ແລະ ສາກົນ ຕາມຄວາມເໝາະສົມ.

ບັນດາທ່ານເອກອັກຄະລັດຖະທູດ ໄດ້ສະແດງຄວາມຂອບໃຈຢ່າງສູງຕໍ່ການຕ້ອນຮັບ ແລະ ການໃຫ້ຂໍ້ມູນ, ຄຳເຫັນແນະນຳ, ແນວທາງນະໂຍບາຍ, ລະບຽບຫຼັກການ, ຄວາມຄາດຫວັງ ແລະ ຂໍ້ສະເໜີຕ່າງໆ ໃນຂົງເຂດວຽກງານທີ່ກ່ຽວຂ້ອງກັບການພົວພັນຮ່ວມມືກັບຕ່າງປະເທດ ແລະ ຈະນຳໄປຈັດຕັ້ງປະຕິບັດ, ໂຄສະນາເຜີຍແຜ່ ແລະ ເປັນບ່ອນອີງໃນການຈັດຕັ້ງປະຕິບັດວຽກງານໃນໄລຍະປະຈຳການຢູ່ຕ່າງປະເທດຂອງຕົນ.

**(ນາງ ອາລິນ ສຸພົມມະປະຖົດ)**

ອາດ ກະວີລາວ

# 2 ທັນວາມີໄຊ

**# ເງາະປ່າ**

| | |
|---|---|
| ❊ ນະພາເບີຍເບີກແຈ້ງ | ແສງສ່ອງເຍືອງທາງ |
| ເມກໝອກຈາງເຫືອຫາຍ | ຫ່າງໄກໄລເວັ້ນ |
| ແລເຫັນສີຄາມຫຸ້ມ | ປົກຄຸມຜືນແຜ່ນ |
| ດິນລາວທົ່ວເຂດແຄວ້ນ | ເໜືອໃຕ້ຮຸ່ງວິໄລ |
| ❊ ໃນສະໄໝກ່ອນກີ້ | ມີພວກຝູງໂຈນ |
| ຄອຍຮຸກຮານຮາວີ | ຈີ່ເຜົາກັດແຫ້ນ |
| ຈົນລາວແປນລ້ອນຈ້ອນ | ພຽງປານຜືນທົ່ງ |
| ເຄຫາໂຮງທັງເຈດີຮາບກ້ຽງ | ທຳລາຍລ້າງຈູດເຜົາ |
| ❊ ຍ້ອນພັກເຮົາສະຫຼາດກ້າ | ນຳພາຮ່ວມໂຮມແຮງ |
| ເຂັ້ມແຂງທັງກາຍໃຈ | ຂັບໄລ່ມວນມານບ້າ |
| ລະດົມປະຊາເຕົ້າ | ຫຼາຍເຜົ່າຄົນໃນຊາດ |
| ປະກາດຕີຕອບຕ້ານ | ມານຮ້າຍຜ່າຍໜີ |
| ❊ ຕົກມາຮອດຍຸກນີ້ | ລາວຮຸ່ງເຮືອງໃສ |
| ສີວິໄລຕາມຍຸກ | ທຽບສາກົນກ້າວ |
| ລະບອບເກົ່າເໜົ່າເໝັນມ້າງ | ສະສາງແປງປ່ຽນ |
| ນຳບົດຮຽນຍຸດທະສາດໃຊ້ | ປົກປັກສ້າງພໍ່າຮັກສາ |
| ❊ 2 ທັນວາ ເອກອ້າງ | ເດີນທາງຂວບ 49 ປີ |
| ຊາດລາວມີຄວາມສຸກ | ມ່ວນສະຫຼອງຝັດຟື້ນ |
| ເວັນ ແລະ ຄືນມັນກ້ອງ | 2 ທັນວາເຊັ່ງຊ່າ |
| ທຸງວົງເດືອນຢືນຄູ່ຟ້າ | ດິນພື້ນແຜ່ນລາວ ຊອບແລ້ວ ! |



## ສັກສາຍ ລະບາຍ

*(ເລື່ອງເບົາໆ ເອົ້າແບບກັບເອງ ບໍ່ເຄັ່ງພິທີການ)*

**# ສຽມຫຼຽມ**

❊ **ຊົມ**ເຊີຍນຳໃຈ**ວັນຊາດທີ 2 ທັນວາ** ທີ່ໄດ້ໝູນວຽນມາບັນຈົບຄົບຮອບອີກວາລະໜຶ່ງ **49 ປີ**ມີເຈີດຈ້າ ປະຊາຊົນຊອງໃນ ພາຍໃຕ້ການນຳພາ ພັກ-ລັດນຳພາກ້າວປອງຊົນລາວເໜືອໃຕ້ ພັດທະນາເຮືອງຮຸ່ງ ລາວເດັ່ນສູງທຽບເທົ້າ ໂລກາຮູ້ຮຸ່ງເຫັນ **ຊອບແລ້ວ!**

❊ **ກອງ**ປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດ ຊຸດທີ IX ພວມຄືກຄືນ ເປັນຊ່ວງວາລະຂອງກົດໝາຍ ທ່ານ **ສສຊ** ຫຼາຍທ່ານໄດ້ປະກອບຄຳເຫັນ ບັນຫາເດັ່ນໃນສັງຄົມ ສ່ອງໃຫ້ເຫັນຫຼາຍດ້ານ ການປະຕິບັດບໍ່ໃຊ້ ຄວາມເໝາະສົມຫຼາຍຢ່າງ ເພື່ອໃຫ້ປະຊາເອກອ້າງ ກົດໝາຍໃຊ້ຄູ່ຄຽງຕົນ **ບົ້ນບາ!**

## ຊອບຍິ້ມ

**# ແອ່ບຕຸ້ງ**

### ເລື່ອງ: ຊື້ເຮັດຫຍັງ

ຊາຍຫູຕຶງຄົນໜຶ່ງ ໄປຖາມຊື້ຢາກັບເພສັດຊະກອນ

**ຊາຍຫູຕຶງ:** ຂ້ອຍຂໍຊື້ຢາແດ່?

**ເພສັດຊະກອນ:** ເປັນຫຍັງມາບໍ່?

**ຊາຍຫູຕຶງ:** ເອົາເປັນເມັດຕີ ຂ້ອຍເປັນຜູ້ໃຫຍ່ ລະໄດ່ ຊິກິນແບບນຳເຮັດຫຍັງ?!!

**ເພສັດຊະກອນ:** ຂ້ອຍ... ຖາມວ່າເຈົ້າເປັນຫຍັງມາ!!

**ຊາຍຫູຕຶງ:** ເອີ... ຄືຂ້ອຍມັກເຈັບທ້ອງຕອບຄ້າຍແລງເຈົ້າ

**ເພສັດຊະກອນ:** ຖ້າເຈົ້າມັກເຈັບ... ລະຊິຊື້ຢາກິນເຮັດຫຍັງ!!!



## ຄະຕິເຕືອນໃຈ

**#ດອກຫຍ້າ**

ຂໍໃຫ້ອົດສາສູ້ ຖຸບຖູບາອາຈານຍົກຍໍ່ໃສ່ເກົ້າ — ພຽນໄປໃຫ້ຖືກບ່ອງ ຄະນິງໄວ້ຢ່າໄດ້ລືມ

# Gabon ອະນຸມັດລັດຖະທຳມະນູນສະບັບໃໝ່ໃນການລົງປະຊາມະຕິ




(Xinhua) - ທ່ານ ແຮມັນ ອິມມອງໂກ (Hermann Immongault) ລັດຖະມົນຕີກະຊວງພາຍໃນຂອງສາທາລະນະລັດກາບົງ ກ່າວໃນຖະແຫຼງການຢ່າງເປັນທາງການໃນວັນທີ 17 ພະຈິກ 2024 ວ່າຜູ້ລົງຄະແນນສຽງຫຼາຍກວ່າ 91 ເປີເຊັນ ໄດ້ເຫັນດີກັບລັດຖະທຳມະນູນສະບັບໃໝ່ ໃນການລົງປະຊາມະຕິເມື່ອວັນເສົາທີ 16 ພະຈິກຜ່ານມາ ແລະ ມີຜູ້ມາໃຊ້ສິດ 53.54 ເປີເຊັນ.

ການລົງປະຊາມະຕິ ມີຂຶ້ນຫຼາຍກວ່າ 1 ປີ ຫຼັງຈາກຄະນະທະຫານ ເຂົ້າຢຶດອຳນາດໃນປະເທດທີ່ອຸດົມດ້ວຍນ້ຳມັນແຫ່ງນີ້ ດ້ວຍການກໍ່ລັດຖະປະຫານ.

ລັດຖະທຳມະນູນສະບັບໃໝ່ ທີ່ສະເໜີໂດຍລັດຖະບານທະຫານເຊິ່ງເຂົ້າຮັບຕຳແໜ່ງຫຼັງການກໍ່ລັດຖະປະຫານໃນເດືອນສິງຫາ 2023 ມີຈຸດປະສົງເພື່ອປ່ຽນຜ່ານຈາກລະບົບເຄິ່ງລັດຖະສະພາ(semi-parliamentary system) ໃນປັດຈຸບັນ ໄປເປັນລະບອບການປົກຄອງແບບປະທານາທິບໍດີ (presidential regime) ເຊິ່ງຫາກປະກາດໃຊ້, ລັດຖະທຳມະນູນສະບັບໃໝ່ຈະຍົກເລີກຕຳແໜ່ງນາຍົກລັດຖະມົນຕີແລະຖອນອຳນາດລັດຖະສະພາໃນການຕິຕຽນຫຼືສະແດງຄວາມບໍ່ໄວ້ວາງໃຈລັດຖະບານ; ຂະນະດຽວກັນ, ປະທານາທິບໍດີຈະໄດ້ຮັບມອບອຳນາດໃນການຍຸບລັດຖະສະພາ 1 ຄັ້ງ ໃນລະຫວ່າງດຳລົງຕຳແໜ່ງຂອງຕົນ.

ພາຍໃຕ້ລັດຖະທຳມະນູນສະບັບໃໝ່, ວາລະການດຳລົງຕຳແໜ່ງຂອງປະທານາທິບໍດີຈະຂະຫຍາຍອອກໄປເປັນ 7 ປີ ເຊິ່ງສາມາດຕໍ່ໄປໄດ້ພຽງຄັ້ງດຽວ, ຈາກເດີມ 5 ປີ ໂດຍສາມາດຕໍ່ອາຍຸໄດ້ບໍ່ຈຳກັດ; ຜູ້ສະໝັກຮັບເລືອກຕັ້ງເປັນປະທານາທິບໍດີ ຈະຕ້ອງເກີດກັບພໍ່ແມ່ຊາວກາບົງຢ່າງໜ້ອຍໜຶ່ງຄົນ, ແຕ່ງງານກັບພົນລະເມືອງກາບົງ ແລະ ມີອາຍຸລະຫວ່າງ 35 ຫາ 70 ປີ.

ລັດຖະສະພາຕ່າງປະເທດ

# ລັດຖະສະພາອິນໂດເນເຊຍກຳນົດຈາກາຕາເປັນເຂດພິເສດ

(Xinhua) - ວັນອັງຄານທີ 19 ພະຈິກຜ່ານມາ, ລັດຖະສະພາອິນໂດເນເຊຍໄດ້ຜ່ານຮ່າງກົດໝາຍກຳນົດໃຫ້ ຈາກາຕາເປັນເຂດພິເສດຂອງປະເທດຢ່າງເປັນທາງການ ຫຼັງຈາກທີ່ຈາກາຕາຖືກຍົກເລີກສະຖານະເປັນນະຄອນຫຼວງ; ຮ່າງກົດໝາຍດັ່ງກ່າວໄດ້ຮັບການຮັບຮອງໃນກອງປະຊຸມລັດຖະສະພາທີ່ເປັນປະທານໂດຍທ່ານອາດີສຄາເດຍ (Adies Kadir) ຮອງປະທານສະພາຜູ້ແທນປະຊາຊົນ, ທ່ານກ່າວຫຼັງຈາກກອງປະຊຸມວ່າ: ສະຖານະຈາກາຕາ ບໍ່ແມ່ນນະຄອນຫຼວງອີກຕໍ່ໄປ, ແຕ່ເປັນເຂດພິເສດ ເນື່ອງຈາກພວກເຮົາໄດ້ຍ້າຍນະຄອນຫຼວງໄປທີ່ນູຊັນຕາຣາ (Nusantara).

ອິນໂດເນເຊຍ ໄດ້ຍ້າຍນະຄອນຫຼວງຂອງຕົນຢ່າງເປັນທາງການແລ້ວ ຈາກຈາກາຕາທີ່ຕັ້ງຢູ່ເກາະຈາວາ (Java) ໄປຢູ່ເມືອງນູຊັນຕາຣາ ຕັ້ງຢູ່ໃນເຂດປົກຄອງເປນາຈາມປາເຊີ (Penajam Paser) ເໜືອ ແຂວງກາລີມັນຕັນ (Kalimantan) ຕາເວັນອອກ; ປັດຈຸບັນ, ນະຄອນຫຼວງແຫ່ງໃໝ່ກຳລັງຢູ່ໃນລະຫວ່າງການກໍ່ສ້າງ, ມີກຳນົດຈະເລີ່ມຍົກຍ້າຍພະນັກງານ-ລັດຖະກອນໃນຕົ້ນປີ 2025.

ອະດີດປະທານາທິບໍດີໂຈໂກ ວີໂດໂດ ໄດ້ອະທິບາຍກ່ອນໜ້ານີ້ວ່າ ການຍ້າຍດັ່ງກ່າວມີຄວາມຈຳເປັນ ເນື່ອງຈາກຈາກາຕາມີປະຊາກອນໜາແໜ້ນ ແລະ ແອອັດຢ່າງຕໍ່ເນື່ອງ.

ລັດຖະມົນຕີກະຊວງພາຍໃນອິນໂດເນເຊຍ ທ່ານ ມູຮຳມັດ ຕີໂຕ ຄານາວຽນ (Muhammad Tito Karnavian) ກ່າວວ່າ ຈາກາຕາຈະປ່ຽນສະຖານະຈາກນະຄອນຫຼວງໄປເປັນເຂດພິເສດ "ຈາກາຕາ ຈະຍັງຄົງເປັນສູນກາງຂອງກິດຈະກຳທາງດ້ານເສດຖະກິດ ແລະ ວັດທະນະທຳ, ຄາດວ່າຈະຮັກສາສະເໜ່ທາງຍຸດທະສາດ ແລະ ຄວາມໂດດເດັ່ນໃນກິດຈະກຳລະດັບຊາດ, ເຖິງແມ່ນວ່າບໍ່ແມ່ນນະຄອນຫຼວງອີກຕໍ່ໄປແລ້ວກໍຕາມ".



ມຸມໜຶ່ງຂອງຈາກາຕາ

# ຕວັກກີ ສະເໜີກົດໝາຍອາວຸດປືນທີ່ເຂັ້ມງວດຂຶ້ນ

(Xinhua) - ເພື່ອຕໍ່ສູ້ກັບອັດຕາອາຊະຍາກຳທີ່ເພີ່ມຂຶ້ນ, ພັກລັດຖະບານຂອງຕວັກກີ ໄດ້ສະເໜີຮ່າງກົດໝາຍຕໍ່ສະພາແຫ່ງຊາດແນໃສ່ກຳນົດລະບຽບການທີ່ເຂັ້ມງວດຍິ່ງຂຶ້ນກ່ຽວກັບອາວຸດປືນທີ່ຜິດກົດໝາຍ; ຮ່າງກົດໝາຍທີ່ພັກຄວາມຍຸຕິທຳ ແລະ ການພັດທະນາ (AKP) ຍື່ນເມື່ອກາງເດືອນພະຈິກຜ່ານມາ ມີຈຸດປະສົງເພື່ອຫຼຸດຜ່ອນການເຂົ້າເຖິງອາວຸດປືນທີ່ບໍ່ມີໃບອະນຸຍາດ ແລະ ບັງຄັບໃຊ້ມາດຕະການລົງໂທດຢ່າງເຂັ້ມງວດຕໍ່ການຄອບຄອງປືນແບບຜິດກົດໝາຍ.

ຮ່າງກົດໝາຍສະບັບນີ້ ສະເໜີໃຫ້ເພີ່ມໂທດຕິດຄຸກຂັ້ນຕ່ຳຕໍ່ການຖື, ຊື້ ຫຼື ໄດ້ຮັບອາວຸດປືນທີ່ບໍ່ມີໃບອະນຸຍາດ ຈາກ 1 ເປັນ 2 ປີ; ຜູ້ກະທຳຜິດຊ້ຳແລ້ວຊ້ຳອີກ ອາດປະເຊີນກັບໂທດຕິດຄຸກສູງສຸດ 4 ປີ. ນອກຈາກນີ້, ຍັງໄດ້ກຳນົດລະບຽບການທີ່ເຂັ້ມງວດກ່ຽວກັບການລັກລອບຂົນສົ່ງ ແລະ ສົ່ງອອກວັດສະດຸອາວຸດປືນ, ໂດຍຜູ້ລະເມີດຈະຕ້ອງຕິດຄຸກເປັນເວລາຍາວນານ.

ຄາດວ່າຮ່າງກົດໝາຍດັ່ງກ່າວຈະຜ່ານ, ເນື່ອງຈາກ AKP ແລະ ບັນດາພັນທະມິດ ຖືສຽງສ່ວນຫຼາຍໃນສະພາແຫ່ງຊາດ.

# ອະໂສກາ ຣັນວາລາ ຈາກພັກ NPP ໄດ້ຮັບເລືອກເປັນປະທານລັດຖະສະພາສີລັງກາ



(Xinhua) - ກອງປະຊຸມຄັ້ງປະຖົມມະລຶກຂອງລັດຖະສະພາສີລັງກາ ຊຸດທີ X ໄຂຂຶ້ນໃນຕອນເຊົ້າວັນພະຫັດທີ 21 ພະຈິກຜ່ານມາ, ໄດ້ແຕ່ງຕັ້ງທ່ານອະໂສກາ ຊາປຸມານ ຣັນວາລາ (Asoka Sapumal Ranwala) ສະມາຊິກລັດຖະສະພາຈາກພັກພະລັງ ປະຊາຊົນ ແຫ່ງ ຊາດ (National People's Power-NPP) ໃຫ້ດຳລົງຕຳແໜ່ງປະທານລັດຖະສະພາຜູ້ໃໝ່; ທ່ານໄດ້ຮັບການສະເໜີຊື່ໂດຍທ່ານນາງ ຮາຣິນີ ອະມາຣາສຸລິຍາ (Harini Amarasuriya) ນາຍົກລັດຖະມົນຕີ, ໄດ້ຮັບການສະໜັບສະໜູນຈາກລັດຖະມົນຕີຕ່າງປະເທດ ທ່ານ ວິຈິດຕາ ເຮຣາດ (Vijitha Herath) ແລະ ໄດ້ຮັບການເລືອກຕັ້ງໂດຍການລົງຄະແນນສຽງເປັນເອກະສັນ.

ທ່ານ ຣິຊວີ ຊາລີ (Rizvie Salih) ແລະ ທ່ານ ນາງ ເຮມາລີ ວີຣະເສກາຣາ (Hemali Weerasekara) ສະມາຊິກລັດຖະສະພາຈາກພັກ NPP ໄດ້ຮັບເລືອກໃຫ້ດຳລົງຕຳແໜ່ງຮອງປະທານລັດຖະສະພາຜູ້ໃໝ່ ແລະ ຮອງປະທານຄະນະກຳມາທິການ ຕາມລຳດັບ.

ໃນລະຫວ່າງກອງປະຊຸມ, ທ່ານປະທານລັດຖະສະພາປະກາດວ່າ ປະທານາທິບໍດີ ອະນຸຣາ ກຸມາຣາ ດິສສະໜາຍາເກ (Anura Kumara Dissanayake) ໄດ້ໃຫ້ການຮັບຮອງທ່ານສາຈິດ ເປຣມທາສາ (Sajith Premadasa) ສະມາຊິກລັດຖະສະພາຈາກພັກພະລັງປະຊາຊົນສາມັກຄີ ເປັນຜູ້ນຳຝ່າຍຄ້ານຢ່າງເປັນທາງການ.

ພັກ NPP ຂອງທ່ານດິສສະໜາຍາເກ ຊະນະ 159 ທີ່ນັ່ງ ໃນການເລືອກຕັ້ງທີ່ຈັດຂຶ້ນເມື່ອວັນທີ 14 ພະຈິກຜ່ານມາ; ລັດຖະສະພາຂອງສີລັງກາມີສະມາຊິກ 225 ທ່ານ, ອາຍຸການ 5 ປີ.

# ລັດຖະສະພາເອີຣົບ ລົງຄະແນນສຽງເລື່ອນບັງຄັບໃຊ້ ກົດໝາຍຕ້ານການຕັດໄມ້ທຳລາຍປ່າ ເປັນເວລາ 1 ປີ




(ຊິນຮວາ) - ສະມາຊິກສະພານິຕິບັນຍັດຂອງສະຫະພາບເອີຣົບສ່ວນຫຼາຍ ສະໜັບສະໜູນການເລື່ອນເວລາບັງຄັບໃຊ້ກົດໝາຍສະບັບໃໝ່ ທີ່ຫ້າມນຳເຂົ້າຜະລິດຕະພັນທີ່ກ່ຽວຂ້ອງກັບການຕັດໄມ້ທຳລາຍປ່າ ເຂົ້າສູ່ສະຫະພາບເອີຣົບ (ອີຢູ) ເນື່ອງຈາກຄວາມເປັນຫ່ວງຂອງຄູ່ຮ່ວມມືທາງການຄ້າ ແລະ ບັນດາປະເທດສະມາຊິກ.

ການລົງຄະແນນສຽງໃນລັດຖະສະພາເອີຣົບ ຫຼື ອີພີ (European Parliament-EP) ເມື່ອວັນພະຫັດທີ 14 ພະຈິກຜ່ານມາ, ສະມາຊິກ 371 ທ່ານ ສະໜັບສະໜູນການເລື່ອນບັງຄັບໃຊ້ກົດໝາຍ ອອກໄປ 1 ປີ, ໃນຂະນະທີ່ 240 ທ່ານ ລົງຄະແນນສຽງຄັດຄ້ານ ແລະ 30 ທ່ານ ງົດອອກສຽງ (ອີພີ ມີ 720 ທີ່ນັ່ງ) ໂດຍຄະແນນສຽງສ່ວນຫຼາຍທີ່ເຫັນດີ ແມ່ນມາຈາກກຸ່ມການເມືອງຝ່າຍຂວາຈັດ ແລະ ກາງຂວາ.

ກົດໝາຍດັ່ງກ່າວ ເຊິ່ງກຳນົດຈະມີຜົນບັງຄັບໃຊ້ໃນວັນທີ 30 ທັນວານີ້ ມີຈຸດປະສົງເພື່ອຮັບປະກັນວ່າສັດ, ໂກໂກ້, ກາເຟ, ນ້ຳມັນປາມ, ຢາງ, ຖົ່ວເຫຼືອງ ແລະ ຜະລິດຕະພັນໄມ້ ທີ່ຂາຍຢູ່ເອີຣົບ ບໍ່ກໍ່ໃຫ້ເກີດການຕັດໄມ້ທຳລາຍປ່າໃນເຂດຕ່າງໆ ນັບຕັ້ງແຕ່ປ່າແອມາຊອນ (Amazon) ໄປຈົນເຖິງອາຊີຕາເວັນອອກສ່ຽງໃຕ້; ແນວໃດກໍດີ, ເພື່ອຕອບສະໜອງຄວາມວິຕົກກັງວົນຂອງບັນດາປະເທດສະມາຊິກອີຢູ ແລະ ປະເທດນອກອີຢູ ລວມທັງຜູ້ຫຼິ້ນໃນອຸດສາຫະກຳ ວ່າພວກເຂົາຈະບໍ່ສາມາດປະຕິບັດຕາມກົດລະບຽບໄດ້ຢ່າງເຕັມທີ່ ຖ້າຫາກບັງຄັບໃຊ້ໃນທ້າຍປີ 2024, ຄະນະກຳມະການເອີຣົບ (European Commission- ອົງການບໍລິຫານຂອງອີຢູ) ຈຶ່ງສະເໜີໃຫ້ເລື່ອນການບັງຄັບໃຊ້ໄປຈົນເຖິງເດືອນທັນວາ 2025 ສຳລັບຜູ້ຄ້າລາຍໃຫຍ່ ແລະ ກາງປີ 2026 ສຳລັບຈຸນລະວິສາຫະກິດ ແລະ ວິສາຫະກິດຂະໜາດນ້ອຍ.

ກົດໝາຍສະບັບນີ້ ເປັນສ່ວນໜຶ່ງຂອງຊຸດສິ່ງແວດລ້ອມ 'ຂໍ້ຕົກລົງສີຂຽວ' ຂອງສະຫະພາບເອີຣົບ ເພື່ອແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ ແລະ ການສູນເສຍຊີວະນາໆພັນ; ແຕ່ໄດ້ຮັບການຄັດຄ້ານຢ່າງໜັກຈາກບັນດາຄູ່ຮ່ວມມືທາງການຄ້າ ລວມທັງສະຫະລັດອາເມລິກາ, ບຣາຊິນ, ມາເລເຊຍ ແລະ ອິນໂດເນເຊຍ ເຊິ່ງການສົ່ງອອກສິນຄ້າຂອງປະເທດເຫຼົ່ານີ້ ອາດຈະໄດ້ຮັບຜົນກະທົບຢ່າງຮ້າຍແຮງຈາກກົດໝາຍດັ່ງກ່າວ.

# ສະພາແຫ່ງຊາດກຳປູເຈຍ ຮັບຮອງທ່ານ ໂສຄົນ ເປັນລັດຖະມົນຕີການຕ່າງປະເທດຄົນໃໝ່

(Xinhua) - ວັນພຸດທີ 20 ພະຈິກຜ່ານມາ, ສະພາແຫ່ງຊາດກຳປູເຈຍ ໄດ້ຮັບຮອງເອົາການແຕ່ງຕັ້ງທ່ານ ປຣັກ ໂສຄົນ (Prak Sokhonn) ອະດີດຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການຕ່າງປະເທດ ເປັນຮອງນາຍົກລັດຖະມົນຕີ ແລະ ລັດຖະມົນຕີກະຊວງການຕ່າງປະເທດ; ທ່ານ ໂສຄົນ ອາຍຸ 70 ປີ ເຂົ້າຮັບຕຳແໜ່ງແທນທ່ານ ຮອງນາຍົກລັດຖະມົນຕີ ແລະ ລັດຖະມົນຕີກະຊວງການຕ່າງປະເທດ ສົກ ເຈນດາ ໂສເພຍ (Sok Chenda Sophea) ທີ່ຍັງດຳລົງຕຳແໜ່ງເປັນຮອງນາຍົກລັດຖະມົນຕີ.




ປະທານສະພາແຫ່ງຊາດ ທ່ານ ນາງ ຄູນ ສຸດາຣີ (Khuon Sudary) ໄດ້ປະກາດຜົນການລົງຄະແນນສຽງ ວ່າ: ສະມາຊິກສະພາແຫ່ງຊາດ 112 ທ່ານ ທີ່ເຂົ້າຮ່ວມກອງປະຊຸມ ໃນນັ້ນມີທ່ານນາຍົກລັດຖະມົນຕີ ຮຸນມາເນດ (Hun Manet) ລົງຄະແນນສຽງເປັນເອກະພາບໃຫ້ຄວາມໄວ້ວາງໃຈແກ່ທ່ານ ໂສຄົນ.

ທ່ານ ໂສຄົນ ດຳລົງຕຳແໜ່ງລັດຖະມົນຕີກະຊວງການຕ່າງປະເທດຄັ້ງທຳອິດ ແຕ່ປີ 2016-2023, ຖືເປັນການປັບປຸງຄະນະລັດຖະມົນຕີເລັກນ້ອຍຄັ້ງທີ 2 ນັບແຕ່ທ່ານ ຮຸນ ມາເນດ ເຂົ້າຮັບຕຳແໜ່ງ ໃນເດືອນ ສິງຫາ 2023 ໂດຍມີວາລະ 5 ປີ; ເດືອນກັນຍາປີນີ້, ສະພາແຫ່ງຊາດ ໄດ້ຮັບຮອງເອົາການແຕ່ງຕັ້ງທ່ານລັດຖະມົນຕີກະຊວງທ່ອງທ່ຽວ ສົກໂສເກນ (Sok Soken) ເປັນລັດຖະມົນຕີກະຊວງກວດກາ ແລະ ລັດຖະມົນຕີກະຊວງກວດກາ ທ່ານ ຮວດ ຮັກ (Huot Hak) ເປັນລັດຖະມົນຕີກະຊວງທ່ອງທ່ຽວ.

# ບາງບົດຮຽນໃນການແກ້ໄຂ ບັນຫາສໍ້ລາດບັງຫຼວງ

❖ ວິເສດ ສະແຫວງສຶກສາ

ໃນຊຸມປີຫຼັງໆມານີ້ ຜູ້ຂຽນໄດ້ພະຍາຍາມສະສົມຂ່າວ ກໍຄືບົດຄວາມຈາກຫຼາຍໆປະເທດ ກ່ຽວກັບບົດຮຽນໃນການສະກັດກັ້ນ ຫຼື ຫຼຸດຜ່ອນບັນຫາສໍ້ລາດບັງຫຼວງ ເຊິ່ງບາງເລື່ອງກໍເປັນບັນຫາໃຫຍ່ໆ ແລະ ບາງເລື່ອງເປັນບັນຫາມະຍິກມະຍ່ອຍ ແຕ່ບໍ່ດ້ອຍຄວາມສຳຄັນ ພຽງແຕ່ວ່າຫຼາຍຄົນແນມກາຍ ບໍ່ຖືວ່າເປັນເລື່ອງຄໍຂາດບາດຕາຍ. ຕໍ່ໄປແມ່ນຕົວຢ່າງ ມາເລົ່າສູ່ກັນຟັງ ພໍຫອມປາກຫອມຄໍ ເຊັ່ນ: ຂ່າວໜັງສືພິມລາວພັດທະນາ ສະບັບວັນທີ 5 ມັງກອນ 2017 ໄດ້ສະເໜີເລື່ອງຍ່ອຍຈາກປະເທດມາເລເຊຍ ທີ່ບອກວ່າທາງຄະນະກຳມະການຕ້ານການສໍ້ລາດບັງຫຼວງ ໄດ້ອອກຄຳເຕືອນບັນດາລັດຖະກອນ ໂດຍສະເພາະແມ່ນພະນັກງານລັດ ບໍ່ໃຫ້ໄປຕີກ໊ອບຢູ່ຕ່າງປະເທດ. ທ່ານ ຊຸນກິຟະລີ ອັບດູນຣິວ ຫົວໜ້າຄະນະກຳມະການດັ່ງກ່າວ ໄດ້ມີຄຳເຫັນກ່ຽວກັບເລື່ອງນີ້ວ່າ ມີພະນັກງານຂັ້ນສູງຈຳນວນໜຶ່ງ ໄດ້ໃຊ້ຕຳແໜ່ງໜ້າທີ່ເພື່ອສະແຫວງຫາຜົນປະໂຫຍດສ່ວນຕົວ ໂດຍຜ່ານຊ່ອງທາງການໄປຕີກ໊ອບຢູ່ຕ່າງປະເທດ ແລະ ສ້າງພາບວ່າ ບັງເອີນໄດ້ພົບກັບນັກທຸລະກິດເວລາຕີກ໊ອບ ແຕ່ໃນຄວາມເປັນຈິງນັ້ນພັດແມ່ນໄດ້ວາງແຜນລ່ວງໜ້າໄວ້ແລ້ວ. ທ່ານຫົວໜ້າຄະນະກຳມະການຈົ່ມທຸກວ່າ ນີ້ເປັນບັນຫາຊ້ຳເຮື້ອມາແຕ່ດົນແລ້ວ. ໃນຂະນະດຽວກໍມີບັນດານັກທຸລະກິດຈຳນວນບໍ່ໜ້ອຍໄດ້ໃຫ້ສິນບົນໂດຍໃຊ້ຮູບການຈ່າຍຄ່າປີ້ຍົນ, ຄ່າທີ່ພັກເຊົາ-ອາຫານ ໃຫ້ພະນັກງານຂັ້ນສູງຂອງລັດເພື່ອຊື້ຈ້າງ ແລະ ຕັກຕວງຜົນປະໂຫຍດກັບຄືນເຂົ້າຖົງ. ທາງຄະນະກຳມະການຕ້ານການສໍ້ລາດບັງຫຼວງມາເລເຊຍ ບອກວ່າຕ້ອງເລັ່ງແກ້ໄຂບັນຫານີ້ຢ່າງເດັດຂາດ ແລະ ຕິດຕາມການປະພຶດຂອງເຈົ້າໜ້າທີ່ເຫຼົ່ານີ້ຢ່າງໃກ້ຊິດ.

ບັດນີ້ກ້ຽວໄປປະເທດອີຣັກ ໃນພາກພື້ນຕາເວັນອອກກາງ. ເລື່ອງນີ້ແກະມາຈາກຂ່າວຕ່າງປະເທດ ໜັງສືພິມວຽງຈັນໃໝ່ ສະບັບວັນທີ 4 ສິງຫາ 2016 ທີ່ບອກວ່າທ່ານ ຮາຍເດີ ອາລອະບຸເດີ ນາຍົກລັດຖະມົນຕີ ອີຣັກ ໃນເວລານັ້ນ ໄດ້ອອກຄຳສັ່ງຫ້າມເຈົ້າໜ້າທີ່ທຸກໆຄົນທີ່ຖືກກ່າວຫາວ່າ ມີພຶດຕິກຳສໍ້ລາດບັງຫຼວງ ເດີນທາງໄປຕ່າງປະເທດ. ທີ່ອອກຄຳສັ່ງຫ້າມກໍເພື່ອໃຫ້ບຸກຄົນເຫຼົ່ານີ້ໄດ້ເຂົ້າສູ່ຂະບວນການຍຸຕິທຳຕາມເວລາ ແລະ ປ້ອງກັນບໍ່ໃຫ້ມີຜູ້ໂຕນປະຄະດີ. ຂ່າວບອກວ່າກ່ອນໜ້ານັ້ນໄດ້ມີເຫດການສໍ້ລາດບັງຫຼວງໃນຂົງເຂດປ້ອງກັນປະເທດ ທີ່ເຮັດໃຫ້ເງິນຈຳນວນຫຼາຍຕື້ໂດລາສະຫະລັດສູນຫາຍໄປ. ກອງປະຊຸມສະພາອີຣັກ ໄດ້ຕູ່ຫານັກການເມືອງຈຳນວນໜຶ່ງ (ໝາຍເຖິງສະມາຊິກລັດຖະສະພາ) ໃນນັ້ນ, ລວມມີທ່ານ ຊາລີມ ອານຈູບູຣີ ປະທານສະພາ ວ່າມີສ່ວນໂກຍເງິນຈຳນວນມະຫາສານດັ່ງກ່າວ. ອີກຂ່າວໜຶ່ງຄ້າຍໆກັນຢູ່ປະເທດອີຣັກ, ຄືທາງການປະເທດເອກົວດໍ (ໃນພາກພື້ນອາເມລິກາໃຕ້) ໄດ້ອອກຄຳສັ່ງຫ້າມອະດີດພະນັກງານລັດຂັ້ນສູງທັງໝົດ ທີ່ເຄີຍຢູ່ໃຕ້ການບັນຊາຂອງອະດີດປະທານາທິບໍດີ ຣາຟາແອນ ກໍເຣຍ ທີ່ຖືກກ່າວຫາວ່າຮູ້ເຫັນເປັນໃຈກັບພະນັກງານຂັ້ນສູງທີ່ມີຄະດີສໍ້ລາດບັງຫຼວງອອກນອກປະເທດ. ນອກຈາກນັ້ນ ທາງການເອກົວດໍ ຍັງໄດ້ປະກາດຂໍການຊ່ວຍເຫຼືອຈາກ 192 ປະເທດໃນໂລກ ເພື່ອໃຫ້ຊ່ວຍຈັບໂຕບັນດາພະນັກງານປຸ້ນຊາດໂກງປະຊາຊົນກັບຄືນມາຮັບໂທດຢູ່ພາຍໃນປະເທດ. ຂ່າວ (ໜັງສືພິມວຽງຈັນໃໝ່ ວັນທີ 23 ຕຸລາ 2018) ບອກວ່າພະນັກງານ ອີກ 31 ຄົນ ທີ່ມີສ່ວນຮ່ວມໃນຄະດີສໍ້ລາດບັງຫຼວງນັ້ນ ຖືກຫ້າມອອກໄປຕ່າງປະເທດເດັດຂາດ.

ຂໍກ້ຽວມາສູ່ຂ່າວໜັງສືພິມລາວພັດທະນາ ສະບັບວັນທີ 22 ມີນາ 2016 ນັ້ນ ເວົ້າເລື່ອງການປະຢັດມັດທະຍັດຫຼຸດຜ່ອນຄວາມສິ້ນເປືອງ ດ້ວຍການຫຼຸດຈຳນວນລັດຖະມົນຕີລົງ ໂດຍໄດ້ບອກວ່າ ກອງປະຊຸມລັດຖະສະພາມຽນມາ ໄດ້ລົງມະຕິໃນວັນທີ 21 ມີນາ 2016 ກ່ຽວກັບການຫຼຸດຈຳນວນລັດຖະມົນຕີ ລົງຈາກ 36 ຄົນ ໃຫ້ເຫຼືອພຽງ 21 ຄົນ ໂດຍອ້າງວ່າ ລັດຖະມົນຫຼາຍຄົນເຮັດວຽກຊ້ຳຊ້ອນຢຽບຕີນຢຽບມືກັນ, ເປືອງເງິນເດືອນລ້າໆ. ຂ່າວບອກວ່າການຫຼຸດຈຳນວນລັດຖະມົນຕີລົງນີ້ ຈະຊ່ວຍໃຫ້ລັດຖະບານປະຢັດເງິນໄດ້ 4 ລ້ານໂດລາສະຫະລັດ ພາຍໃນເວລາ 5 ປີ (ອາຍຸການລັດຖະບານ).

ສຸດທ້າຍແມ່ນຂ່າວຄົ້ນຄວ້າຂອງສຳນັກງານຂ່າວສານປະເທດລາວ (ຂປລ) ຄັ້ງວັນທີ 17 ທັນວາ 2014 ທີ່ໃຫ້ຮູ້ວ່າທາງການ ສປຈີນ ໄດ້ຫຼຸດຊັ້ນພະນັກງານລັດຂັ້ນສູງ ຈຳນວນ 1,000 ຄົນ ຍ້ອນມີຄອບຄົວຢູ່ຕ່າງປະເທດ ແຕ່ປະຕິເສດກັບຄືນ ສປຈີນ. ນອກຈາກນັ້ນ, ທາງການຈີນໃນເວລານັ້ນ ຍັງກວດພົບວ່າ ມີເຈົ້າໜ້າທີ່ລະດັບກາງ ແລະ ລະດັບທ້ອງຖິ່ນ ຈຳນວນ 3,200 ຄົນ ມີລູກ-ເມຍ ຢູ່ຕ່າງປະເທດ ແລະ ບໍ່ຍອມກັບຄືນ ສປຈີນ. ທາງການເຊື່ອວ່າບັນດາເຈົ້າໜ້າທີ່ດັ່ງກ່າວ ໃຊ້ຄອບຄົວ ແລະ ລູກຫຼານ ໃນການໂອນເງິນໄປຕ່າງປະເທດເພື່ອຫຼົບຫຼີກການກວດກາ ແລະ ຈັບກຸມ ທາງການຈີນໄດ້ຍື່ນຄຳຂາດໃຫ້ພະນັກງານເຫຼົ່ານີ້ເລືອກສອງເສັ້ນທາງຄື: 1. ຖືກຫຼຸດຊັ້ນ ແລະ ຍ້າຍໄປເຮັດວຽກທີ່ຕ່ຳກວ່າ ແລະ 2. ສັ່ງໃຫ້ຄອບຄົວກັບຄືນປະເທດ.

ສຳລັບຜູ້ໃດສົນໃຈກ່ຽວກັບບັນຫາທີ່ສະເໜີມາຂ້າງເທິງ ສາມາດເບິ່ງແຫຼ່ງຂ່າວທີ່ອ້າງມາໄດ້.

# ປະມວນພາບບັນຍາກາດກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX



**ຜູ້ຊີ້ນຳ**

ທ່ານ ສີງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**

ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ຄຳຫວັນ ດາລາວົງ

**ຄະນະບັນນາທິການ**

ທ່ານ ປອ. ພິດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ

**ກອງບັນນາທິການ**

ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ອາລິນ ສຸພົມມະປະດິດ

**ອອກແບບ - ຈັດໜ້າ**

ທ່ານ ນາງ ກຸກິກ ບຸດດາໄຊ